ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 21 /ລບ
ນະຄອນຫຼວງວຽງຈັນ, ວັນທີ 31.01.2019.

# ດຳລັດ
## ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມໜັງສືສະເໜີ ສະບັບເລກທີ 6612/ກຊສ, ລົງວັນທີ 28 ທັນວາ 2018 ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ລັດຖະບານ ອອກດຳລັດ :

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເພື່ອໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງຖືກຕ້ອງ, ໂປ່ງໃສ ແລະ ເອກະພາບ ແນໃສ່ປ້ອງກັນ, ຫຼຸດຜ່ອນ, ແກ້ໄຂຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຮັບປະກັນການທົດແທນຄ່າເສຍຫາຍຢ່າງສົມເຫດສົມຜົນ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ຟື້ນຟູຊີວິດການເປັນຢູ່ ຂອງຜູ້ໄດ້ຮັບຜົນກະທົບໃຫ້ດີຂຶ້ນກວ່າເກົ່າ, ເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ມີປະສິດທິຜົນສູງສຸດ, ຮັບປະກັນສິດ ແລະ ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແມ່ນຂະບວນການສຶກສາ, ສຳຫຼວດ, ວິໄຈຂໍ້ມູນ ແລະ ຄາດຄະເນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທັງດ້ານບວກ ແລະ ດ້ານລົບ ທີ່ຈະເກີດຂຶ້ນຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນໄລຍະສັ້ນ, ໄລຍະຍາວ ພ້ອມທັງກຳນົດວິທີການ ແລະ ມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫຼີກເວັ້ນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

ຜົນຂອງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເປັນໜຶ່ງໃນເງື່ອນໄຂຕົ້ນຕໍ ໃຫ້ແກ່ລັດຖະບານ ໃນການພິຈາລະນາການອະນຸມັດໂຄງການລົງທຶນ ແລະ ກິດຈະການຕ່າງໆ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ສິ່ງແວດລ້ອມ ໝາຍເຖິງ ທຸກສິ່ງທຸກຢ່າງ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ຍ້ອນມະນຸດສ້າງຂຶ້ນ ທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງ ເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ. ສິ່ງແວດລ້ອມປະກອບດ້ວຍ: ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ;
2. ສິ່ງແວດລ້ອມສັງຄົມ ໝາຍເຖິງ ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມ ທີ່ມະນຸດສ້າງຂຶ້ນ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະ ລິດ, ການຄົງຕົວ ແລະ ການຂະຫຍາຍຕົວ ຂອງມະນຸດ ແລະ ທຳມະຊາດ;
3. ສິ່ງແວດລ້ອມທຳມະຊາດ ໝາຍເຖິງ ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມ ທີ່ເກີດຂຶ້ນຕາມທຳມະຊາດ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວ ຂອງມະນຸດ ແລະ ທຳມະຊາດ;
4. ຜົນກະທົບຕໍ່ສິ່ງແວດລ້ອມ ໝາຍເຖິງ ສິ່ງກະທົບທັງດ້ານບວກ, ດ້ານລົບ, ທາງກົງ ຫຼື ທາງອ້ອມ ໃນໄລຍະສັ້ນ ຫຼື ໄລຍະຍາວ ທີ່ເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕໍ່ລະບົບນິເວດ, ຊັບພະຍາກອນທຳມະຊາດ, ການປ່ຽນແປງດິນຟ້າອາກາດ, ມໍລະດົກທາງດ້ານທຳມະຊາດ, ມໍລະດົກທາງວັດທະນາທຳ, ຊີວິດ, ສຸຂະພາບ, ຊັບສິນ, ການດຳລົງຊີວິດ, ທີ່ຢູ່ອາໄສ ແລະ ອື່ນໆ;
5. ການບູລະນະຟື້ນຟູສິ່ງແວດລ້ອມ ໝາຍເຖິງ ການເຮັດໃຫ້ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຖືກທຳລາຍ ຫຼື ເສື່ອມໂຊມ ແລ້ວນັ້ນ ມີການຟື້ນຕົວ ແລະ ໄດ້ຮັບການປັບແປງ ໃຫ້ຢູ່ໃນສະພາບທີ່ດີ ແລະ ລະບົບນິເວດມີຄວາມສົມດຸນ;
6. ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໝາຍເຖິງ ແຜນການທີ່ໄດ້ສັງລວມເອົາບັນດາໜ້າວຽກຕົ້ນຕໍ ດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ກຳນົດວິທີການ ແລະ ມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ໄດ້ສຶກສາໄວ້ໃນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ພ້ອມທັງກຳນົດການຈັດຕັ້ງ, ຄວາມຮັບຜິດຊອບ, ຕາຕະລາງເວລາ ແລະ ງົບປະມານໃຫ້ພຽງພໍ ເພື່ອຈັດຕັ້ງປະຕິບັດແຜນການດັ່ງກ່າວ;
7. ໂຄງການສະຫຼັບຊັບຊ້ອນ ໝາຍເຖິງ ໂຄງການລົງທຶນຂະໜາດໃຫຍ່, ມີຫຼາຍກິດຈະກຳ, ຫຼາຍຂັ້ນຕອນ, ເຕັກໂນໂລຊີສະຫຼັບຊັບຊ້ອນ, ຄວາມສ່ຽງທີ່ສົ່ງຜົນກະທົບຮ້າຍແຮງຕໍ່ສຸຂະພາບ ແລະ ຊີວິດຂອງປະຊາຊົນ ຫຼື ມີຜົນກະທົບຢ່າງຫຼວງຫຼາຍຕໍ່ສິ່ງແວດລ້ອມ;
8. ຜົນກະທົບແບບສະສົມ ໝາຍເຖິງ ຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເກີດຂຶ້ນຢ່າງຕໍ່ເນື່ອງ, ເພີ່ມຫຼາຍຂຶ້ນ, ມີການໂຮມກັນຂອງຜົນກະທົບທັງທາງກົງ, ທາງອ້ອມ, ໄລຍະສັ້ນ ແລະ/ຫຼື ໄລຍະຍາວ ທີ່ເກີດຈາກກິດຈະກຳຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີໃນອະດີດ, ປະຈຸບັນ ແລະ ອະນາຄົດ ບວກກັບຜົນກະທົບຈາກໂຄງການ ທີ່ກຳລັງສະເໜີ;
9. ການປະເມີນຜົນກະທົບແບບສະສົມ ໝາຍເຖິງ ການສຶກສາ, ສຳຫຼວດ, ວິໄຈຂໍ້ມູນ ແລະ ຄາດຄະເນຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ຈາກໂຄງການທີ່ມີຢູ່ແລ້ວ ແລະ ໂຄງການທີ່ກຳລັງສະເໜີ ລວມທັງການພິຈາລະນາບັນຫາ ທີ່ພົວພັນກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຊຶ່ງຕ້ອງເຮັດເປັນບົດປະເມີນຜົນກະທົບແບບສະສົມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຕ່າງຫາກ;
10. ເຈົ້າຂອງໂຄງການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ສຶກສາ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຢູ່ ສປປ ລາວ;

11. ຜູ້ໄດ້ຮັບຜົນກະທົບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ແບບຖາວອນ ຫຼື ແບບຊົ່ວຄາວ, ທາງກົງ, ທາງອ້ອມ, ໄລຍະສັ້ນ ແລະ/ຫຼື ໄລຍະຍາວ;
12. ຜູ້ມີສ່ວນຮ່ວມ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມສົນໃຈ, ມີສ່ວນກ່ຽວຂ້ອງ ຫຼື ມີຜົນໄດ້ຜົນເສຍ ໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ;
13. ຜົນກະທົບທາງກົງ ໝາຍເຖິງ ຜົນກະທົບທີ່ເກີດຈາກການດຳເນີນກິດຈະກຳຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ໂດຍກົງຕໍ່ຊີວິດ, ສຸຂະພາບ, ຊັບພະຍາກອນທຳມະຊາດ, ລະບົບນິເວດ, ການສູນເສຍຊັບສິນ, ການຍ້າຍຖິ່ນຖານ, ການດຳລົງຊີວິດຂອງປະຊາຊົນ;
14. ຜົນກະທົບທາງອ້ອມ ໝາຍເຖິງ ຜົນກະທົບທີ່ເກີດຈາກການດຳເນີນກິດຈະກຳຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຊຶ່ງບໍ່ແມ່ນຜົນກະທົບທາງກົງ ເປັນຕົ້ນ: ຜົນກະທົບທາງດ້ານຈິດໃຈ, ຄວາມເຊື່ອຖື, ຮີດຄອງປະເພນີ, ສູນເສຍເວລາ ແລະ ໂອກາດໃນການທຳມາຫາກິນ, ການປ່ຽນແປງດິນຟ້າອາກາດ, ມົນລະພິດ;
15. ຜົນກະທົບທາງບວກ ໝາຍເຖິງ ການເພີ່ມຄວາມສະດວກສະບາຍ ແລະ ສ້າງໂອກາດທີ່ດີໃຫ້ແກ່ປະຊາຊົນ ຜູ້ທີ່ຖືກຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນຕົ້ນ: ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ, ການສ້າງວຽກເຮັດງານທຳ, ໂຄງລ່າງພື້ນຖານ, ລະບົບການສຶກສາ, ລະບົບສາທາລະນະສຸກ ໄດ້ຮັບການພັດທະນາ;
16. ຜົນກະທົບທາງລົບ ໝາຍເຖິງ ຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ແລະ ປະຊາຊົນ ຜູ້ທີ່ຖືກຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນຕົ້ນ: ສິ່ງແວດລ້ອມເສື່ອມໂຊມ, ຊີວິດການເປັນຢູ່ຂອງປະຊາຊົນມີຄວາມທຸກຍາກລົງກວ່າເກົ່າ, ໂຄງລ່າງພື້ນຖານໄດ້ຮັບຄວາມເສຍຫາຍ.

### ມາດຕາ 4 ນະໂຍບາຍກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ລັດຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ທີ່ພັດທະນາໂຄງການລົງທຶນ ແລະ ກິດຈະການຕ່າງໆ ຢູ່ ສປປ ລາວ ລົງທຶນ, ນຳໃຊ້ເຕັກນິກ, ວິທະຍາສາດທີ່ທັນສະໄໝ ເຂົ້າໃນການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແນໃສ່ປົກປັກຮັກສາສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ.

ລັດ ຊຸກຍູ້, ສົ່ງເສີມ ວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ດ້ວຍການວາງນະໂຍບາຍ, ສ້າງໂຄງລ່າງພື້ນຖານ, ພັດທະນາບຸກຄະລາກອນ, ສ້າງຈິດສຳນຶກ, ໂຄສະນາເຜີຍແຜ່, ສຶກສາອົບຮົມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກອື່ນ ໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ.

ລັດ ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ດ້ວຍການສະໜອງຂໍ້ມູນ, ປະກອບຄຳເຫັນເຂົ້າໃນວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

### ມາດຕາ 5 ຫຼັກການພື້ນຖານ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຄຸ້ມຄອງ ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ຮັບປະກັນການມີສ່ວນຮ່ວມຂອງສັງຄົມ;
5. ຮັບປະກັນຂໍ້ມູນໃຫ້ມີຄວາມເຊື່ອຖືໄດ້, ຊັດເຈນ, ມີລັກສະນະວິທະຍາສາດ, ສາມາດກວດສອບ ແລະ ຢັ້ງຢືນຄືນໄດ້;
6. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ;

ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ ຢູ່ ສປປ ລາວ.

ມາດຕາ 7 ການພົວພັນຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ ແລະ ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການກັ່ນຕອງ ແລະ ການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ

ມາດຕາ 8 ການກັ່ນຕອງໂຄງການລົງທຶນ ແລະ ກິດຈະການຕ່າງໆ

ການກັ່ນຕອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ແມ່ນຂັ້ນຕອນທຳອິດ ຂອງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງເປັນຂັ້ນຕອນພິຈາລະນາວ່າໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ສະເໜີມານັ້ນ ມີຄວາມຈຳເປັນ ຫຼື ບໍ່ຈຳເປັນ ໃນການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ການກັ່ນຕອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃຫ້ກວດກາຕາມບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ໃນກໍລະນີທີ່ໂຄງການລົງທຶນ ຫຼື ກິດຈະການໃດໜຶ່ງ ບໍ່ໄດ້ຖືກກຳນົດໄວ້ ໃນບັນຊີດັ່ງກ່າວ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະດຳເນີນການກັ່ນຕອງ ໂດຍອີງໃສ່ຂໍ້ມູນໂຄງການ ຫຼື ກິດຈະການນັ້ນ ເພື່ອພິຈາລະນາວ່າມີຄວາມຈຳເປັນ ຫຼື ບໍ່ຈຳເປັນ ໃນການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ມາດຕາ 9 ການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ

ການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ ໄດ້ຈັດແບ່ງອອກເປັນສອງກຸ່ມ ດັ່ງນີ້:

1. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຄາດຄະເນຈະມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດໜ້ອຍ ຫຼື ບໍ່ຮຸນແຮງ ຕ້ອງດຳເນີນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
2. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຄາດຄະເນຈະມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຢ່າງຫຼວງຫຼາຍ ຫຼື ຮຸນແຮງ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ. ສຳລັບໂຄງການທີ່ມີຜົນກະທົບຕໍ່ສຸຂະພາບ ຕ້ອງໄດ້ດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

## ພາກທີ III
## ປະເພດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ມາດຕາ 10 ປະເພດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ມີສອງປະເພດ ດັ່ງນີ້:

1. ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
2. ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ.

## ໝວດທີ 1
## ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ

**ມາດຕາ 11 ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ**

ການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແມ່ນການສຶກສາ, ສໍາຫຼວດ ແລະ ຄົ້ນຄວ້າວິໄຈຂໍ້ມູນ ເພື່ອຄາດຄະເນຜົນກະທົບເບື້ອງຕົ້ນຕໍ່ສິ່ງແວດລ້ອມທີ່ບໍ່ຮຸນແຮງ ຊຶ່ງອາດຈະເກີດຂຶ້ນ ພ້ອມທັງກໍານົດວິທີການ ແລະ ມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫຼີກເວັ້ນ ຫຼື ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ລວມທັງການພິຈາລະນາບັນຫາທີ່ພົວພັນກັບຜົນກະທົບ ຂອງການປ່ຽນແປງດິນຟ້າອາກາດ.

ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຢູ່ໃນບັນຊີການຈັດແບ່ງກຸ່ມທີໜຶ່ງ ຕ້ອງດໍາເນີນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ດ້ວຍການສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລ້ວສະເໜີຕໍ່ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອພິຈາລະນາທົບທວນ.

**ມາດຕາ 12 ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ**

ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການອະທິບາຍລັກສະນະຂອງໂຄງການ;
2. ການຄັດເລືອກທາງເລືອກຂອງໂຄງການ;
3. ການອະທິບາຍຂໍ້ມູນພື້ນຖານດ້ານສິ່ງແວດລ້ອມ ເປັນຕົ້ນ ດ້ານກາຍະພາບ, ຊີວະພາບ, ເສດຖະກິດ-ສັງຄົມ ໃນພື້ນທີ່ຂອງໂຄງການ ແລະ ພື້ນທີ່ອ້ອມຂ້າງໂຄງການ;
4. ການປະເມີນຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ໄພພິບັດ.

ໃນການສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໄປພ້ອມ ໂດຍປະຕິບັດຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 23 ຂອງດໍາລັດສະບັບນີ້.

**ມາດຕາ 13 ການສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ**

ໃນການສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ເຈົ້າຂອງໂຄງການຕ້ອງປະຕິບັດ ດັ່ງນີ້:

1. ສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ເປັນພາສາລາວ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ດໍາເນີນໄປພ້ອມກັບການສ້າງບົດວິພາກເສດຖະກິດ-ເຕັກນິກ;
2. ປະສານສົມທົບ ກັບ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຂໍອະນຸມັດລົງເກັບກໍາຂໍ້ມູນ ແລະ ດໍາເນີນຂະບວນການມີສ່ວນຮ່ວມ ຂອງສັງຄົມ ກ່ຽວກັບການພັດທະນາໂຄງການ;
3. ເກັບກໍາຂໍ້ມູນລະອຽດທາງດ້ານກາຍະພາບ, ຊີວະພາບ ແລະ ເສດຖະກິດ-ສັງຄົມ ໃນເຂດໂຄງການ ແລະ ເຂດໃກ້ຄຽງ ລວມທັງການເກັບກໍາຂໍ້ມູນທີ່ມີແລ້ວ, ການລົງເກັບກໍາຂໍ້ມູນພາກສະໜາມ, ການສໍາພາດປະຊາຊົນ ພ້ອມທັງວິເຄາະຂໍ້ມູນ. ໃນການເກັບຂໍ້ມູນພາກສະໜາມ ຕ້ອງກໍານົດຈຸດເກັບຕົວຢ່າງ ແລະ ເກັບຕົວຢ່າງໃຫ້ຄົບຖ້ວນ, ຖືກຕ້ອງຕາມເຕັກນິກ ແລະ ແທດເໝາະກັບສະພາບຕົວຈິງຂອງພື້ນທີ່. ແຫຼ່ງທີ່ມາຂອງຂໍ້ມູນຕ້ອງມີຄວາມໜ້າເຊື່ອຖື ແລະ ຜົນການວິໄຈຂໍ້ມູນພາກສະໜາມຕ້ອງມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;
4. ສຶກສາຢ່າງໜ້ອຍ ສາມ ທາງເລືອກ ຊຶ່ງແຕ່ລະທາງເລືອກ ຕ້ອງສະແດງໃຫ້ເຫັນເນື້ອໃນສໍາຄັນ ເປັນຕົ້ນ ທີ່ຕັ້ງຂອງໂຄງການ, ຂະໜາດຂອງໂຄງການ ແລະ ຂະບວນການຜະລິດ ລວມທັງການອະທິບາຍຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມທັງປຽບທຽບ ລະຫວ່າງ ສາມ ທາງເລືອກ ແລະ ອະທິບາຍເຫດຜົນ ໃນການຕັດສິນໃຈເອົາທາງເລືອກໃດໜຶ່ງ. ໃນການສຶກສາທາງເລືອກນັ້ນ ຕ້ອງມີທາງເລືອກທີ່ບໍ່ມີການພັດທະນາໂຄງການ ຊຶ່ງຕ້ອງອະທິບາຍສະພາບສິ່ງແວດລ້ອມ, ດ້ານບວກ ແລະ ດ້ານລົບຂອງທາງເລືອກດັ່ງກ່າວ;

5. ສຶກສາຂໍ້ມູນພື້ນຖານດ້ານສຸຂະພາບ, ບົດບາດຍິງ-ຊາຍ ແລະ ຊົນເຜົ່າ ເພື່ອປະກອບເຂົ້າເປັນພາກໜຶ່ງໃນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
6. ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ເປັນສະບັບໜຶ່ງຕ່າງຫາກ ຂອງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
7. ດຳເນີນຂະບວນການມີສ່ວນຮ່ວມຂອງສັງຄົມ ໂດຍຈັດກອງປະຊຸມປຶກສາຫາລືຂັ້ນບ້ານ ເພື່ອເຜີຍແຜ່ຂໍ້ມູນ ແລະ ຮັບຟັງຄຳຄິດຄຳເຫັນຈາກຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມ ຕໍ່ຜົນຂອງການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 14 ການປະກອບເອກະສານຂໍຮັບຮອງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ**

ເຈົ້າຂອງໂຄງການ ທີ່ມີຈຸດປະສົງຂໍຮັບຮອງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຮັບຮອງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
2. ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພ້ອມດ້ວຍບົດສັງລວມຫຍໍ້;
3. ບົດບັນທຶກກອງປະຊຸມປຶກສາຫາລື ຂັ້ນບ້ານ;
4. ບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ;
5. ສຳເນົາໃບອະນຸຍາດດຳເນີນການບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ແລະ ລາຍຊື່ຄະນະທີມງານທີ່ດຳເນີນການສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ ພ້ອມທັງຊີວະປະຫວັດຫຍໍ້.

**ມາດຕາ 15 ການກວດກາເອກະສານປະກອບ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຕ້ອງກວດກາຄຳຮ້ອງຂໍຮັບຮອງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມດ້ວຍເອກະສານປະກອບ ແລ້ວແຈ້ງໃຫ້ເຈົ້າຂອງໂຄງການ ເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບການຂໍຮັບຮອງບົດສຶກສາດັ່ງກ່າວ ເປັນຕົ້ນໄປ. ຖ້າເຫັນວ່າເອກະສານຖືກຕ້ອງ ແລະ ຄົບຖ້ວນ, ເຈົ້າຂອງໂຄງການ ຕ້ອງປະກອບໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ ຢ່າງໜ້ອຍ ສິບ ຊຸດ ສົ່ງໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ.

**ມາດຕາ 16 ການທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ທົບທວນເນື້ອໃນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ພາຍໃນກຳນົດເວລາ ສີ່ສິບ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານຈາກເຈົ້າຂອງໂຄງການ ເປັນຕົ້ນໄປ ໂດຍບໍ່ນັບໄລຍະເວລາ ທີ່ເຈົ້າຂອງໂຄງການ ນຳເອົາເອກະສານກັບໄປປັບປຸງຄືນໃໝ່. ການປັບປຸງບົດສຶກສາດັ່ງກ່າວ ແຕ່ລະຄັ້ງ ບໍ່ໃຫ້ເກີນ ສາມ ເດືອນ, ຖ້າເກີນ ສາມ ເດືອນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຈະເລີ່ມຂະບວນການທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແຕ່ຕົ້ນຄືນໃໝ່. ໃນກໍລະນີປັບປຸງເອກະສານ ເກີນ ຫົກ ເດືອນ ຖືວ່າບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຕົກໄປ ແລະ ເຈົ້າຂອງໂຄງການ ຕ້ອງດຳເນີນຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງ ແວດລ້ອມຄືນໃໝ່.

ການທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ມີ ສອງ ໄລຍະ ຄື:

1. ການເກັບກຳຄຳເຫັນ;
2. ການທົບທວນ ຂັ້ນສຸດທ້າຍ.

ມາດຕາ 17 ການເກັບກຳຄຳເຫັນ

ການເກັບກຳຄຳເຫັນ ຕ້ອງດຳເນີນໄປພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານຈາກເຈົ້າຂອງໂຄງການ ເປັນຕົ້ນໄປ ແລະ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແຕ່ງຕັ້ງຄະນະຜູ້ຊ່ຽວຊານສະເພາະດ້ານຂັ້ນແຂວງ ແລະ ສົ່ງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມດ້ວຍແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ໃຫ້ຄະນະຜູ້ຊ່ຽວຊານສະເພາະດ້ານຂັ້ນແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ປະກອບຄຳເຫັນ ພ້ອມທັງເອົາລົງເວັບໄຊ ເພື່ອໃຫ້ສັງຄົມປະກອບຄຳເຫັນ ພາຍໃນກຳນົດເວລາ ຊາວ ວັນລັດຖະການ. ຖ້າພາກສ່ວນໃດຫາກບໍ່ໄດ້ສົ່ງບົດປະກອບຄຳເຫັນ ຕາມກຳນົດເວລາດັ່ງກ່າວ ຖືວ່າເຫັນດີຕາມນັ້ນ;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສົມທົບກັບເຈົ້າຂອງໂຄງການ ຈັດກອງປະຊຸມປຶກສາຫາລື ຂັ້ນເມືອງ ໂດຍການເຂົ້າຮ່ວມຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອປະກອບຄຳເຫັນໃສ່ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລ້ວສັງລວມ ສົ່ງໃຫ້ເຈົ້າຂອງໂຄງການ ເພື່ອປັບປຸງກ່ອນຈັດກອງປະຊຸມປຶກສາຫາລືວິຊາການ;
3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສົມທົບກັບເຈົ້າຂອງໂຄງການ, ພະແນກການ, ອົງການປົກຄອງ ຂັ້ນເມືອງ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ລົງກວດກາຕົວຈິງພາກສະໜາມ ແລະ ຈັດກອງປະຊຸມປຶກສາຫາລືວິຊາການ ເພື່ອປະກອບຄຳເຫັນໃສ່ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
4. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສັງລວມຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ,ຄຳເຫັນທີ່ໄດ້ຮັບໃນເວັບໄຊ, ຜົນກອງປະຊຸມປຶກສາຫາລືວິຊາການ, ຜົນການກວດກາຕົວຈິງພາກສະໜາມ ແລະ ຜົນການທົບທວນຂອງຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນແຂວງ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ເພື່ອໃຫ້ເຈົ້າຂອງໂຄງການ ປັບປຸງແລ້ວສົ່ງຄືນໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ.

ມາດຕາ 18 ການທົບທວນຂັ້ນສຸດທ້າຍ

ການທົບທວນຂັ້ນສຸດທ້າຍ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນແຂວງ ຈັດກອງປະຊຸມ ເພື່ອທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສະບັບປັບປຸງ ທີ່ໄດ້ຮັບຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລ້ວລາຍງານຜົນຂອງການປະຊຸມ ຕໍ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບບົດສຶກສາເບື້ອງຕົ້ນ ສະບັບປັບປຸງນັ້ນ;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ພິຈາລະນາ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ໄດ້ຮັບບົດລາຍງານຜົນຂອງກອງປະຊຸມຈາກຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນແຂວງ ຕາມແຕ່ລະກໍລະນີ ດັ່ງນີ້:

- ຖ້າເຫັນວ່າຖືກຕ້ອງ ໃຫ້ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແກ່ເຈົ້າຂອງໂຄງການ;
- ຖ້າເຫັນວ່າເນື້ອໃນບໍ່ຄົບຖ້ວນ ໃຫ້ແຈ້ງຕໍ່ເຈົ້າຂອງໂຄງການ ເພື່ອປັບປຸງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລ້ວສົ່ງກັບຄືນ;
- ຖ້າເຫັນວ່າບໍ່ຖືກຕ້ອງ ໃຫ້ແຈ້ງຕອບປະຕິເສດ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນຂອງການປະຕິເສດ ຕໍ່ເຈົ້າຂອງໂຄງການ;

- ຖ້າເຫັນວ່າມີຜົນກະທົບຫຼາຍ ໃຫ້ແຈ້ງຕໍ່ເຈົ້າຂອງໂຄງການເພື່ອດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ.

## ໝວດທີ2
## ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

**ມາດຕາ 19 ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ**

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແມ່ນຂະບວນການວິໄຈບັນຫາ ເພື່ອຄາດຄະເນຜົນກະທົບ ຊຶ່ງອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ລວມທັງການພິຈາລະນາບັນຫາທີ່ພົວພັນກັບຜົນກະທົບ ຂອງການປ່ຽນແປງດິນຟ້າອາກາດ ຊຶ່ງຕ້ອງເຮັດເປັນບົດລາຍງານ. ຄຽງຄູ່ກັບບົດລາຍງານດັ່ງກ່າວ ຕ້ອງສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ.

ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຢູ່ໃນບັນຊີການຈັດແບ່ງກຸ່ມທີສອງ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ດ້ວຍການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລ້ວສະເໜີຕໍ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເພື່ອພິຈາລະນາທົບທວນ.

ຂະບວນການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ມີ ດັ່ງນີ້:

1. ການກຳນົດຂອບເຂດການສຶກສາ ແລະ ໜ້າວຽກ;
2. ການທົບທວນຂອບເຂດການສຶກສາ ແລະ ໜ້າວຽກ;
3. ການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພ້ອມທັງສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
4. ການທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ.

**ມາດຕາ 20 ການກຳນົດຂອບເຂດການສຶກສາ ແລະ ໜ້າວຽກ**

ການກຳນົດຂອບເຂດການສຶກສາ ແມ່ນການເກັບກຳຂໍ້ມູນພື້ນຖານ ກ່ຽວກັບສະພາບສິ່ງແວດລ້ອມ ຂອງໂຄງການ ເພື່ອກຳນົດເນື້ອໃນທີ່ສຳຄັນ ແລະ ຜົນກະທົບຕ່າງໆ ທີ່ຈະຕ້ອງໄດ້ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ການກຳນົດຂອບເຂດໜ້າວຽກ ແມ່ນໜ້າວຽກທັງໝົດທີ່ຈະຕ້ອງຈັດຕັ້ງປະຕິບັດ ໃນເວລາດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍອີງຕາມຂອບເຂດການສຶກສາ ເພື່ອປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ເຈົ້າຂອງໂຄງການ ຕ້ອງກຳນົດຂອບເຂດການສຶກສາ ແລະ ໜ້າວຽກໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຂອງໂຄງການ ໃຫ້ສອດຄ່ອງກັບລະບຽບການ ທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມວາງອອກ. ການກຳນົດຂອບເຂດການສຶກສາ ແລະ ໜ້າວຽກດັ່ງກ່າວ ຕ້ອງດຳເນີນໂດຍຜູ້ບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ທີ່ໄດ້ຮັບອະນຸຍາດ ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 21 ການທົບທວນຂອບເຂດການສຶກສາ ແລະ ໜ້າວຽກ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດຳເນີນການທົບທວນ ແລະ ຈັດປະຊຸມປຶກສາຫາລືກັບກະຊວງ, ອົງການທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ ເພື່ອພິຈາລະນາຮັບຮອງຂອບເຂດການສຶກສາ ແລະ ໜ້າວຽກ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຈາກເຈົ້າຂອງໂຄງການ ເປັນຕົ້ນໄປ.

ຖ້າເຫັນວ່າການກຳນົດຂອບເຂດການສຶກສາ ແລະ ໜ້າວຽກນັ້ນ ມີເນື້ອໃນບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ເພື່ອປັບປຸງ ແລ້ວສົ່ງກັບຄືນ.

ມາດຕາ 22 ການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແມ່ນການລາຍງານຜົນການສຶກສາ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຊຶ່ງລວມມີ ຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ສິ່ງທີ່ມີຊີວິດ, ລະບົບນິເວດ ແລະ ສິ່ງແວດລ້ອມ ເພື່ອກຳນົດມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ທີ່ຈະເກີດຂຶ້ນຢ່າງເໝາະສົມ. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕ້ອງມີເນື້ອໃນຈະແຈ້ງ, ເຂົ້າໃຈງ່າຍ ພ້ອມທັງກຳນົດວິທີການ ແລະ ເຕັກນິກ ທີ່ນຳໃຊ້ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ.

ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແຕ່ລະໂຄງການມີຄວາມແຕກຕ່າງກັນ ຂຶ້ນກັບແຕ່ລະປະເພດຂອງໂຄງການ ແຕ່ຕ້ອງມີເນື້ອໃນຕົ້ນຕໍກ່ຽວກັບລັກສະນະຂອງໂຄງການ, ທາງເລືອກຂອງໂຄງການ, ຂໍ້ມູນພື້ນຖານດ້ານສິ່ງແວດລ້ອມ ເປັນຕົ້ນ ດ້ານກາຍະພາບ, ຊີວະພາບ, ເສດຖະກິດ-ສັງຄົມ ໃນພື້ນທີ່ ແລະ ພື້ນທີ່ອ້ອມຂ້າງ ຂອງໂຄງການ, ຜົນກະທົບແບບສະສົມ, ການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ, ຜົນກະທົບຕໍ່ສຸຂະພາບ, ບົດບາດຍິງ-ຊາຍ, ຊົນເຜົ່າ ພ້ອມທັງກຳນົດວິທີການ ແລະ ມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ໄພພິບັດ.

ໃນການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ເຈົ້າຂອງໂຄງການ ຕ້ອງປະຕິບັດ ດັ່ງນີ້:

1. ສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ເປັນພາສາລາວ ໂດຍສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ຂອບເຂດການສຶກສາ ແລະ ໜ້າວຽກ ແລະ ດຳເນີນໄປພ້ອມກັບການສ້າງບົດວິພາກເສດຖະກິດ-ເຕັກນິກ;
2. ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພາຍໃນກຳນົດເວລາ ຫົກເດືອນ ຫຼັງຈາກໄດ້ຮັບຮອງຂອບເຂດການສຶກສາ ແລະ ໜ້າວຽກ, ຖ້າກາຍກຳນົດເວລາດັ່ງກ່າວແລ້ວ ການຮັບຮອງນັ້ນ ຈະຖືກລົບລ້າງ. ຖ້າເຈົ້າຂອງໂຄງການ ຫາກມີຈຸດປະສົງສືບຕໍ່ປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕ້ອງກຳນົດຂອບເຂດການສຶກສາ ແລະ ໜ້າວຽກ ຄືນໃໝ່ ແລ້ວສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ;
3. ປະສານສົມທົບ ກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຂໍອະນຸມັດລົງເກັບກຳຂໍ້ມູນ ແລະ ດຳເນີນຂະບວນການມີສ່ວນຮ່ວມຂອງສັງຄົມ ກ່ຽວກັບການພັດທະນາໂຄງການ;
4. ເກັບກຳຂໍ້ມູນລະອຽດທາງດ້ານກາຍະພາບ, ຊີວະພາບ ແລະ ເສດຖະກິດ-ສັງຄົມ ໃນເຂດໂຄງການ ແລະ ເຂດໃກ້ຄຽງ, ຜົນກະທົບແບບສະສົມ, ການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ, ຜົນກະທົບຕໍ່ສຸຂະພາບ, ບົດບາດຍິງ-ຊາຍ, ຊົນເຜົ່າ ໃນກໍລະນີໂຄງການທີ່ມີການຈັດສັນພູມລຳເນົາ ແລະ ອາຊີບ ລວມທັງຂໍ້ມູນທີ່ມີແລ້ວ, ຂໍ້ມູນພາກສະໜາມ, ການສຳພາດປະຊາຊົນ ພ້ອມທັງວິເຄາະຂໍ້ມູນ. ໃນການເກັບຂໍ້ມູນພາກສະໜາມ ຕ້ອງກຳນົດຈຸດເກັບຕົວຢ່າງໃຫ້ຄົບຖ້ວນ ແລະ ແທດເໝາະກັບສະພາບຕົວຈິງຂອງພື້ນທີ່. ແຫຼ່ງທີ່ມາຂອງຂໍ້ມູນ ຕ້ອງມີຄວາມໜ້າເຊື່ອຖື ແລະ ມີການຢັ້ງຢືນ ຈາກພາກສ່ວນທີ່ກ່ຽວຂ້ອງ;
5. ສຶກສາຢ່າງໜ້ອຍ ສາມ ທາງເລືອກ ຊຶ່ງແຕ່ລະທາງເລືອກ ຕ້ອງສະແດງໃຫ້ເຫັນເນື້ອໃນສຳຄັນ ເປັນຕົ້ນ ທີ່ຕັ້ງຂອງໂຄງການ, ຂະໜາດຂອງໂຄງການ ແລະ ຂະບວນການຜະລິດ ລວມທັງການອະທິບາຍຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມທັງປຽບທຽບ ລະຫວ່າງ ສາມ ທາງເລືອກ ແລະ ອະທິບາຍເຫດຜົນ ໃນການຕັດສິນໃຈເອົາທາງເລືອກໃດໜຶ່ງ. ໃນການສຶກສາທາງເລືອກນັ້ນ ຕ້ອງມີທາງເລືອກທີ່ບໍ່ມີການພັດທະນາໂຄງການ ຊຶ່ງຕ້ອງອະທິບາຍສະພາບສິ່ງແວດລ້ອມ, ດ້ານບວກ ແລະ ດ້ານລົບຂອງທາງເລືອກດັ່ງກ່າວ;
6. ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ເປັນສະບັບໜຶ່ງຕ່າງຫາກ ພ້ອມທັງຄັດຕິດແຜນຄຸ້ມຄອງສະເພາະດ້ານ ຕາມແຕ່ກໍລະນີ;

7. ດຳເນີນການປະເມີນຜົນກະທົບແບບສະສົມ, ການປະເມີນຜົນກະທົບຂ້າມຊາຍແດນ, ການປະເມີນຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ໄພພິບັດ, ການປະເມີນບົດບາດຍິງ-ຊາຍ, ການປະເມີນຊົນເຜົ່າ ໂດຍແຍກເປັນແຕ່ລະບົດສະເພາະ ພ້ອມທັງມີແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕໍ່ແຕ່ລະກໍລະນີ.

ສຳລັບໂຄງການລົງທຶນກ່ຽວກັບໄຟຟ້ານ້ຳຕົກ ທີ່ນອນຢູ່ຕາມລຳແມ່ນ້ຳຂອງ ໃຫ້ປະຕິບັດຕາມເງື່ອນໄຂທີ່ໄດ້ຕົກລົງກັນ ຢູ່ໃນສັນຍາ ວ່າດ້ວຍການຮ່ວມມືເພື່ອພັດທະນາອ່າງແມ່ນ້ຳຂອງ ແບບຍືນຍົງ ສະບັບປີ 1995 ແລະລະບຽບການ ທີ່ກ່ຽວຂ້ອງ.

ສຳລັບໂຄງການທີ່ມີຄວາມສະຫຼັບຊັບຊ້ອນ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕ້ອງສ້າງເປັນພາສາລາວ ແລະ ພາສາອັງກິດ.

ໃນກໍລະນີໂຄງການທີ່ມີຄວາມສ່ຽງຕໍ່ສຸຂະພາບ ເຈົ້າຂອງໂຄງການ ຕ້ອງສ້າງບົດປະເມີນຜົນກະທົບຕໍ່ສຸຂະພາບເປັນບົດໜຶ່ງຕ່າງຫາກ ໄປພ້ອມກັບການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພ້ອມທັງມີແຜນຄຸ້ມຄອງ ແລະ ຕິດຕາມກວດກາວຽກງານສາທາລະນະສຸກ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກະຊວງສາທາລະນະສຸກ ວາງອອກ.

## ມາດຕາ 23 ການສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ

ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕ້ອງປະກອບມີເນື້ອໃນຕົ້ນຕໍ ກ່ຽວກັບໜ້າວຽກ, ກິດຈະກຳຂອງໂຄງການ, ຜົນກະທົບທີ່ອາດຈະເກີດຂຶ້ນ, ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ໄພພິບັດ, ມາດຕະການປ້ອງກັນ, ຫຼຸດຜ່ອນ, ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ, ອຸປະຕິເຫດ ຫຼື ເຫດການສຸກເສີນ ທີ່ອາດຈະເກີດຂຶ້ນ, ການບູລະນະຟື້ນຟູສິ່ງແວດລ້ອມ, ກຳນົດເວລາ, ງົບປະມານ ແລະ ຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດ, ແຜນການຕິດຕາມກວດກາຂອງເຈົ້າຂອງໂຄງການ ແລະ ຂະແໜງການ ທີ່ກ່ຽວຂ້ອງຂອງລັດ. ນອກນັ້ນ, ຍັງມີແຜນຄຸ້ມຄອງສະເພາະດ້ານ ຕາມແຕ່ກໍລະນີ ດັ່ງນີ້:

1. ແຜນຮັບມືກັບເຫດການສຸກເສີນ;
2. ແຜນການທົດແທນຊີວະນາໆພັນ, ການປູກໄມ້, ຟື້ນຟູປ່າ ແລະ ປົກປັກຮັກສາປ່າໄມ້ໃນເຂດຍອດນ້ຳ, ການຄຸ້ມຄ້ອງອ່າງຮັບນ້ຳ ໃນກໍລະນີໂຄງການດັ່ງກ່າວ ມີຜົນກະທົບຕໍ່ເນື້ອທີ່ດິນປ່າໄມ້;
3. ແຜນການທົດແທນຄ່າເສຍຫາຍ, ຈັດສັນພູມລຳເນົາ ແລະ ອາຊີບ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ, ແຜນພັດທະນາຊຸມຊົນ ແລະ ແຜນຄຸ້ມຄອງສະເພາະດ້ານ;
4. ແຜນການກໍ່ສ້າງ ແລະ ແລວທາງຂົນສົ່ງ, ສະຖານີຂົນສົ່ງຈຸດພັກລົດ ແລະ ອື່ນໆ;
5. ແຜນຄຸ້ມຄອງການໄຫຼຂອງນ້ຳ ເພື່ອຫຼໍ່ລ້ຽງຊີວະນາໆພັນເຂດລຸ່ມເຂື່ອນ, ແຜນການອະນາໄມຊີວະມວນສານ, ການຄຸ້ມຄ້ອງອ່າງເກັບນ້ຳ, ແຜນການຄຸ້ມຄອງ ແລະ ພັດທະນາເຂດລຸ່ມເຂື່ອນ, ແຜນການຄຸ້ມຄອງການປະມົງ ແລະ ແຜນຄຸ້ມຄອງສະເພາະດ້ານ;
6. ແຜນປິດບໍ່ແຮ່, ແຜນບູລະນະຟື້ນຟູສິ່ງແວດລ້ອມ ແລະ ແຜນຕິດຕາມກວດກາຫຼັງການປິດບໍ່ແຮ່;
7. ການສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ມີ ສອງ ໄລຍະ ດັ່ງນີ້:

- ໄລຍະທີໜຶ່ງ ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໄປຄຽງຄູ່ກັບການສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
- ໄລຍະທີສອງ ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສະບັບປັບປຸງ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໃນໄລຍະກໍ່ສ້າງ, ໄລຍະດຳເນີນງານ ແລະ ໄລຍະສິ້ນສຸດໂຄງການ.

## ມາດຕາ 24 ການປະກອບເອກະສານຂໍຮັບຮອງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

ເຈົ້າຂອງໂຄງການ ທີ່ມີຈຸດປະສົງຂໍຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕ້ອງປະກອບເອກະສານ ດັ່ງນີ້ :

1. ຄໍາຮ້ອງຂໍຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
2. ຂອບເຂດການສຶກສາ ແລະ ໜ້າວຽກໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມແລະ ແຜນຄຸ້ມຄອງສະເພາະດ້ານ ພ້ອມດ້ວຍບົດສັງລວມຫຍໍ້;
4. ບົດບັນທຶກກອງປະຊຸມປຶກສາຫາລື ຂັ້ນບ້ານ;
5. ບົດວິພາກເສດຖະກິດເຕັກນິກ-ເບື້ອງຕົ້ນ;
6. ສໍາເນົາໃບອະນຸຍາດດໍາເນີນການບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ແລະ ລາຍຊື່ຄະນະທີມງານ ທີ່ດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ ພ້ອມຊີວະປະຫວັດຫຍໍ້.

**ມາດຕາ 25 ການກວດກາເອກະສານ ປະກອບ**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຕ້ອງກວດກາຄໍາຮອງຂໍຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພ້ອມດ້ວຍເອກະສານປະກອບ ແລ້ວແຈ້ງໃຫ້ເຈົ້າຂອງໂຄງການ ເປັນລາຍລັກອັກສອນ ພາຍໃນກໍານົດເວລາ ສິບ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານປະກອບການຂໍຮັບຮອງບົດດັ່ງກ່າວເປັນຕົ້ນໄປ. ຖ້າເຫັນວ່າເອກະສານຖືກຕ້ອງ ແລະ ຄົບຖ້ວນ, ເຈົ້າຂອງໂຄງການ ຕ້ອງປະກອບໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ ຢ່າງໜ້ອຍ ສິບຫ້າ ຊຸດ ສົ່ງໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 26 ການທົບທວນ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທົບທວນເນື້ອໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພາຍໃນກໍານົດເວລາ ເກົ້າສິບຫ້າ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານ ຈາກເຈົ້າຂອງໂຄງການ ເປັນຕົ້ນໄປ ໂດຍບໍ່ນັບໄລຍະເວລາ ທີ່ເຈົ້າຂອງໂຄງການນໍາເອົາເອກະສານກັບໄປປັບປຸງຄືນ. ການປັບປຸງບົດປະເມີນດັ່ງກ່າວ ແຕ່ລະຄັ້ງ ບໍ່ໃຫ້ເກີນ ຫົກ ເດືອນ, ຖ້າເກີນ ກໍານົດເວລາດັ່ງກ່າວ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຈະເລີ່ມຂະບວນການທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແຕ່ຕົ້ນຄືນ. ໃນກໍລະນີປັບປຸງເອກະສານ ເກີນ ສອງ ປີ ຖືວ່າບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕົກໄປ ແລະ ເຈົ້າຂອງໂຄງການຕ້ອງດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຄືນໃໝ່.

ການທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ມີ ສອງ ໄລຍະ ຄື:

1. ການເກັບກໍາຄໍາເຫັນ;
2. ການທົບທວນຂັ້ນສຸດທ້າຍ.

**ມາດຕາ 27 ການເກັບກໍາຄໍາເຫັນ**

ການເກັບກໍາຄໍາເຫັນຕ້ອງດໍາເນີນພາຍໃນກໍານົດເວລາ ເຈັດສິບ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານຈາກເຈົ້າຂອງໂຄງການ ເປັນຕົ້ນໄປ ແລະ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຕ່ງຕັ້ງຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ແລະ ສົ່ງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພ້ອມດ້ວຍແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພາຍໃນກໍານົດເວລາ ຫ້າ ວັນລັດຖະການ ໃຫ້ຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ປະກອບຄໍາເຫັນ ພ້ອມທັງເອົາລົງເວັບໄຊ ເພື່ອໃຫ້ສັງຄົມປະກອບຄໍາເຫັນ ພາຍໃນກໍານົດເວລາ ຫ້າສິບ ວັນລັດຖະການ. ຖ້າພາກສ່ວນໃດຫາກບໍ່ໄດ້ສົ່ງບົດປະກອບຄໍາເຫັນ ຕາມກໍານົດເວລາດັ່ງກ່າວ ຖືວ່າເຫັນດີຕາມນັ້ນ;
2. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບເຈົ້າຂອງໂຄງການ ຈັດກອງປະຊຸມປຶກສາຫາລື ຂັ້ນເມືອງ ໂດຍການເຂົ້າຮ່ວມຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອປະກອບຄໍາເຫັນ ໃສ່ບົດປະເມີນຜົນ

ກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລ້ວສັງລວມ ສົ່ງໃຫ້ເຈົ້າຂອງໂຄງການ ເພື່ອປັບປຸງກ່ອນຈັດກອງປະຊຸມປຶກສາຫາລືວິຊາການ;

3. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມສົມທົບກັບເຈົ້າຂອງໂຄງການ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລົງກວດກາຕົວຈິງພາກສະໜາມ ແລະ ຈັດກອງປະຊຸມປຶກສາຫາລືວິຊາການ ເພື່ອປະກອບຄຳເຫັນໃສ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພ້ອມທັງສັງລວມຄຳເຫັນໃຫ້ເຈົ້າຂອງໂຄງການ ເພື່ອປັບປຸງບົດປະເມີນດັ່ງກ່າວ ກ່ອນຈັດກອງປະຊຸມປຶກສາຫາລື ຂັ້ນແຂວງ;
4. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບເຈົ້າຂອງໂຄງການ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດກອງປະຊຸມປຶກສາຫາລື ຂັ້ນແຂວງ ເພື່ອປະກອບຄຳເຫັນໃສ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
5. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສັງລວມຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ, ຄຳເຫັນທີ່ໄດ້ຮັບໃນເວັບໄຊ, ຜົນກອງປະຊຸມປຶກສາຫາລື ຂັ້ນແຂວງ, ຜົນການກວດກາຕົວຈິງພາກສະໜາມ ແລະ ຜົນການທົບທວນ ຂອງຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ເພື່ອໃຫ້ເຈົ້າຂອງໂຄງການປັບປຸງ ແລ້ວສົ່ງຄືນໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 28 ການທົບທວນຂັ້ນສຸດທ້າຍ**

ການທົບທວນຂັ້ນສຸດທ້າຍ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ຈັດກອງປະຊຸມ ເພື່ອທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສະບັບປັບປຸງ ທີ່ໄດ້ຮັບຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວລາຍງານຜົນຂອງການປະຊຸມ ຕໍ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພາຍໃນກຳນົດເວລາ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບບົດປະເມີນ ສະບັບປັບປຸງນັ້ນ;
2. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ນັບແຕ່ໄດ້ຮັບບົດລາຍງານຜົນຂອງກອງປະຊຸມ ຈາກຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ຕາມແຕ່ລະກໍລະນີ ດັ່ງນີ້:

- ຖ້າເຫັນວ່າຖືກຕ້ອງ ໃຫ້ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແກ່ເຈົ້າຂອງໂຄງການ;
- ຖ້າເຫັນວ່າເນື້ອໃນບໍ່ຄົບຖ້ວນ ໃຫ້ແຈ້ງຕໍ່ເຈົ້າຂອງໂຄງການ ເພື່ອປັບປຸງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລ້ວສົ່ງກັບຄືນ;
- ຖ້າເຫັນວ່າບໍ່ຖືກຕ້ອງ ໃຫ້ແຈ້ງຕອບປະຕິເສດ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນຂອງການປະຕິເສດຕໍ່ເຈົ້າຂອງໂຄງການ.

**ມາດຕາ 29 ການທົບທວນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ**

ການທົບທວນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ມີ ສອງ ໄລຍະ ດັ່ງນີ້:

1. ໄລຍະທີໜຶ່ງ ທົບທວນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໄປຄຽງຄູ່ກັບການທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຕາມມາດຕາ 16, 17 ແລະ 18 ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕາມມາດຕາ 26, 27 ແລະ 28 ຂອງດຳລັດສະບັບນີ້;
2. ໄລຍະທີສອງ ທົບທວນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສະບັບປັບປຸງ ຫຼື ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມໃນໄລຍະກໍ່ສ້າງ ຫຼື ໄລຍະດຳເນີນງານ ຫຼື ໄລຍະສິ້ນສຸດໂຄງການ. ການ

ທົບທວນດັ່ງກ່າວ ໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນທີໄດ້ຮັບແຜນການດັ່ງກ່າວຈາກເຈົ້າຂອງໂຄງການ ເປັນຕົ້ນໄປ ໂດຍຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ເຈົ້າຂອງໂຄງການ ຈັດກອງປະຊຸມປຶກສາຫາລື ແລະ ລົງກວດກາພາກສະໜາມ ຕາມຄວາມຈຳເປັນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ ແຜນບູລະນະຟື້ນຟູສິ່ງແວດລ້ອມ.

**ມາດຕາ 30 ການທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຂອງໂຄງການສະຫຼັບຊັບຊ້ອນ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຂອງໂຄງການສະຫຼັບຊັບຊ້ອນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 26, 28 ແລະ 27 ຂອງດຳລັດສະບັບນີ້. ການທົບທວນຕ້ອງດຳເນີນພາຍໃນກຳນົດເວລາ ໜຶ່ງຮ້ອຍຊາວ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານຈາກເຈົ້າຂອງໂຄງການ ເປັນຕົ້ນໄປ ໂດຍບໍ່ນັບໄລຍະເວລາທີ່ເຈົ້າຂອງໂຄງການ ນຳເອົາເອກະສານກັບໄປປັບປຸງຄືນໃໝ່.

ໃນກໍລະນີຈຳເປັນ ກໍສາມາດຈ້າງຜູ້ຊ່ຽວຊານຕ່າງປະເທດສະເພາະດ້ານ ເພື່ອຊ່ວຍທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານ. ສຳລັບຄ່າຈ້າງ ແລະ ຄ່າໃຊ້ຈ່າຍອື່ນ ທີ່ຕິດພັນກັບການຈ້າງຜູ້ຊ່ຽວຊານ ເປັນຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ.

## ໝວດທີ 3
## ຜູ້ຊ່ຽວຊານສະເພາະດ້ານ

**ມາດຕາ 31 ຜູ້ຊ່ຽວຊານສະເພາະດ້ານ**

ຜູ້ຊ່ຽວຊານສະເພາະດ້ານ ແມ່ນບຸກຄົນທີ່ມີຄຸນວຸດທິສະເພາະດ້ານ ທີ່ຕິດພັນກັບວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ມາຈາກສຳນັກງານ, ອົງການ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ເອກະຊົນ, ພະນັກງານບຳນານ ແລະ ພົນລະເມືອງລາວ.

ຄະນະຜູ້ຊ່ຽວຊານສະເພາະດ້ານ ແມ່ນຄະນະບໍ່ປະຈຳການ ຊຶ່ງປະກອບດ້ວຍ:

1. ຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ຖືກແຕ່ງຕັ້ງໂດຍລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມແຕ່ລະປະເພດໂຄງການ;
2. ຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນແຂວງ ຖືກແຕ່ງຕັ້ງໂດຍຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຕາມແຕ່ລະປະເພດໂຄງການ.

ຜູ້ທີ່ປະກອບເຂົ້າໃນຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ແລະ ຂັ້ນແຂວງ ຕ້ອງເປັນຜູ້ທີ່ມີລາຍຊື່ ຢູ່ໃນປຶ້ມລາຍຊື່ຜູ້ຊ່ຽວຊານສະເພາະດ້ານເທົ່ານັ້ນ.

**ມາດຕາ 32 ເງື່ອນໄຂຂອງຜູ້ຊ່ຽວຊານສະເພາະດ້ານ**

ຜູ້ຊ່ຽວຊານສະເພາະດ້ານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຈັນຍາບັນ, ຈັນຍະທຳ ແລະ ບໍລິສຸດສັດຊື່;
2. ມີຄວາມຮູ້, ຄວາມສາມາດ ທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
3. ມີປະສົບການໃນວຽກງານວິຊາສະເພາະດ້ານ ຢ່າງໜ້ອຍ ຫ້າ ປີ;
4. ບໍ່ເຄີຍຖືກສານຕັດສິນລົງໂທດ ໂດຍເຈດຕະນາ ທີ່ພົວພັນກັບວິຊາຊີບຂອງຕົນ;
5. ມີສຸຂະພາບດີ.

**ມາດຕາ 33 ປຶ້ມລາຍຊື່ຜູ້ຊ່ຽວຊານສະເພາະດ້ານ**

ປຶ້ມລາຍຊື່ຜູ້ຊ່ຽວຊານສະເພາະດ້ານ ແມ່ນປຶ້ມສັງລວມລາຍຊື່ຜູ້ຊ່ຽວຊານໃນດ້ານຕ່າງໆ ລວມທັງປະຫວັດຫຍໍ້ຂອງພວກກ່ຽວ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງບັນຊີລາຍຊື່ຜູ້ຊ່ຽວຊານສະເພາະດ້ານ ບົນພື້ນຖານການຄັດເລືອກຕາມເງື່ອນໄຂ ຂອງຜູ້ຊ່ຽວຊານສະເພາະດ້ານ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 32 ຂອງດຳລັດສະບັບນີ້ ແລ້ວຈັດພິມເປັນປຶ້ມລາຍຊື່ຜູ້ຊ່ຽວຊານສະເພາະດ້ານ. ປຶ້ມລາຍຊື່ດັ່ງກ່າວຈະຖືກປັບປຸງ ທຸກ ຫ້າ ປີ ຫຼື ໄວກວ່ານັ້ນ ຖ້າເຫັນວ່າຈຳເປັນ ແລະ ສົ່ງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 34 ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄະນະຜູ້ຊ່ຽວຊານສະເພາະດ້ານ**

ຄະນະຜູ້ຊ່ຽວຊານສະເພາະດ້ານ ມີສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
2. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ເຂົ້າຮ່ວມການກວດກາພາກສະໜາມ ຢູ່ເຂດໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມຄວາມຈຳເປັນ;
3. ເປັນເອກະລາດໃນການທົບທວນ;
4. ໄດ້ຮັບຄ່າແຮງງານຕາມລະບຽບການ;
5. ມີຄຳເຫັນເປັນລາຍລັກອັກສອນ ຕໍ່ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ຜົນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຂອງເຈົ້າຂອງໂຄງການ;
6. ຮັບຜິດຊອບທຸກຄຳເຫັນ ທີ່ຕົນປະກອບໄປ;
7. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທຳ, ວ່ອງໄວ ແລະ ປອດໃສ;
8. ລາຍງານຜົນຂອງການທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
9. ຮັກສາຄວາມລັບ ຂອງການທົບທວນຂອງຄະນະຜູ້ຊ່ຽວຊານສະເພາະດ້ານ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;
10. ເສຍພັນທະໃຫ້ລັດ ຕາມກົດໝາຍ ແລະ ລະບຽບການ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**ມາດຕາ 35 ງົບປະມານການເຄື່ອນໄຫວ ສຳລັບຄະນະຜູ້ຊ່ຽວຊານສະເພາະດ້ານ**

ງົບປະມານການເຄື່ອນໄຫວ ສຳລັບຄະນະຜູ້ຊ່ຽວຊານສະເພາະດ້ານ ນຳໃຊ້ລາຍຮັບການບໍລິການວິຊາການ ຈາກການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕາມກົດໝາຍ ຫຼື ງົບປະມານ ຂອງໂຄງການລົງທຶນ .

## ໝວດທີ 4

## ການມີສ່ວນຮ່ວມຂອງສັງຄົມ

**ມາດຕາ 36 ການມີສ່ວນຮ່ວມຂອງສັງຄົມ**

ການມີສ່ວນຮ່ວມຂອງສັງຄົມ ແມ່ນຂະບວນການປຶກສາຫາລື, ການສະໜອງຂໍ້ມູນຂ່າວສານ ແລະ ຮັບຄຳຄິດຄຳເຫັນ ຂອງທຸກພາກສ່ວນຂອງສັງຄົມ ກ່ຽວກັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນໄລຍະສ້າງ ແລະ ພິຈາລະນາບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບ

ລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມ ໃນແຕ່ລະໄລຍະ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ການມີສ່ວນຮ່ວມຂອງສັງຄົມມີໄລຍະດັ່ງນີ້:

1. ການກະກຽມ ແລະ ວາງແຜນໂຄງການ:
2. ການກໍ່ສ້າງ ແລະ ດຳເນີນໂຄງການ;
3. ການສິ້ນສຸດໂຄງການ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ, ອົງການປົກຄອງທ້ອງຖິ່ນ ແລະ ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບຮ່ວມກັນ ໃນການຮັບປະກັນ ແລະ ສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ເຈົ້າຂອງໂຄງການ ຕ້ອງສ້າງແຜນການການມີສ່ວນຮ່ວມຂອງສັງຄົມ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໃນແຕ່ລະໄລຍະ ພ້ອມທັງສ້າງບົດສຶກສາວິໄຈການມີສ່ວນຮ່ວມຂອງສັງຄົມ ໂດຍສະເພາະກ່ຽວກັບຊົນເຜົ່າ, ບົດບາດພາບຍິງ-ຊາຍ, ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫຼືອໂຕເອງໄດ້ ແລະ ກຸ່ມຄົນດ້ອຍໂອກາດທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ.

**ມາດຕາ 37 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກະກຽມ ແລະ ວາງແຜນໂຄງການ**

ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກະກຽມ ແລະ ວາງແຜນໂຄງການ ມີດັ່ງນີ້:

1. ໃນໄລຍະສ້າງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ:

- ເຈົ້າຂອງໂຄງການ ເຜີຍແຜ່ແຜນການ ການມີສ່ວນຮ່ວມຂອງສັງຄົມ ພ້ອມທັງເກັບກຳຂໍ້ມູນພື້ນຖານ ໃນເຂດໂຄງການ ແລະ ເຂດໃກ້ຄຽງໂຄງການ ເປັນຕົ້ນ ຂໍ້ມູນສະຖິຕິກ່ຽວກັບພົນລະເມືອງ, ເສດຖະກິດ-ສັງຄົມ, ສະພາບແວດລ້ອມສັງຄົມ ແລະ ທຳມະຊາດ;
- ເຈົ້າຂອງໂຄງການ ສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຜີຍແຜ່ຂໍ້ມູນ ໃຫ້ແກ່ປະຊາຊົນ ໃນເຂດໂຄງການ ແລະ ເຂດໃກ້ຄຽງໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນ ກ່ຽວກັບແຜນພັດທະນາໂຄງການ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ໂດຍການຈັດກອງປະຊຸມເຜີຍແຜ່ ຂັ້ນຕ່າງໆ ແລະ ຮູບການອື່ນ ທັງເປັນພາສາລາວ ແລະ ພາສາຊົນເຜົ່າໃນກໍລະນີມີຄວາມຈຳເປັນ;

2. ໄລຍະທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ:

- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສົມທົບກັບເຈົ້າຂອງໂຄງການ ຈັດກອງປະຊຸມຂັ້ນເມືອງ, ຂັ້ນວິຊາການ ແລະ ລົງກວດກາພາກສະໜາມ ເພື່ອປຶກສາຫາລືຜ່ານບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງປະກອບມີ ຜູ້ເຂົ້າຮ່ວມຄືປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ, ອົງການປົກຄອງຂັ້ນບ້ານ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ຂະແໜງການຮັບຜິດຊອບໂຄງການລົງທຶນ, ຂະແໜງການອື່ນທີ່ກ່ຽວຂ້ອງ ຂັ້ນເມືອງ, ຂັ້ນແຂວງ ແລະ ຜູ້ມີສ່ວນຮ່ວມອື່ນ ໂດຍອີງໃສ່ຈຸດພິເສດຂອງກອງປະຊຸມ ແຕ່ລະຂັ້ນ;
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບເຈົ້າຂອງໂຄງການ ຈັດກອງປະຊຸມ ຂັ້ນເມືອງ, ຂັ້ນວິຊາການ, ລົງກວດກາພາກສະໜາມ ແລະ ຂັ້ນແຂວງ ເພື່ອປຶກສາຫາລື ຜ່ານບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຊຶ່ງປະກອບມີ ຜູ້ເຂົ້າຮ່ວມຄືປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ, ຂະແໜງ

ການຮັບຜິດຊອບໂຄງການລົງທຶນ, ຂະແໜງການອື່ນທີ່ກ່ຽວຂ້ອງ ຂັ້ນສູນກາງ, ທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມອື່ນ ໂດຍອີງໃສ່ຈຸດພິເສດຂອງກອງປະຊຸມ ແຕ່ລະຂັ້ນ.

**ມາດຕາ 38 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກໍ່ສ້າງ ແລະ ດຳເນີນໂຄງການ**

ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກໍ່ສ້າງ ແລະ ດຳເນີນໂຄງການມີ ດັ່ງນີ້:

1. ເຈົ້າຂອງໂຄງການ ປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອແຈ້ງໃຫ້ຜູ້ທີ່ຢູ່ໃນເຂດໂຄງການ ແລະ ເຂດໃກ້ຄຽງໂຄງການ ເປັນແຕ່ລະໄລຍະ ກ່ຽວກັບການດຳເນີນກິດຈະການຂອງໂຄງການ ທີ່ອາດຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ເປັນຕົ້ນ ການເປີດໜ້າດິນ, ການລະເບີດ, ການຂົນສົ່ງ, ນຳໃຊ້ ແລະ ເກັບຮັກສາວັດຖຸ ແລະ ສານເຄມີອັນຕະລາຍ, ການປ່ອຍນ້ຳອອກຈາກອ່າງເກັບນ້ຳ;
2. ເຈົ້າຂອງໂຄງການ ປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເຜີຍແຜ່ບັນດາເອກະສານ ກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ ເປັນຕົ້ນ ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ບົດລາຍງານການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມຂອງໂຄງການ ໂດຍຜ່ານທາງໜັງສືພິມ, ໂທລະພາບ, ໂທລະໂຄ່ງ, ວິທະຍຸ, ເວັບໄຊ ຫຼື ສື່ສິ່ງພິມອື່ນ;
3. ຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນສາມາດປະກອບຄຳຄິດຄຳເຫັນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ ແລະ ກິດຈະການຕ່າງໆຜ່ານທາງໂທລະສັບສາຍດ່ວນ, ທາງເອເລັກໂຕຣນິກ, ສົ່ງຄຳເຫັນ, ຄຳຮ້ອງທຸກ ຢ່າງເປັນລາຍລັກອັກສອນ ໃຫ້ເຈົ້າຂອງໂຄງການຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຫຼື ຮູບການອື່ນ.

**ມາດຕາ 39 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະສິ້ນສຸດໂຄງການ**

ເຈົ້າຂອງໂຄງການ ຕ້ອງແຈ້ງໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ ກ່ຽວກັບການດຳເນີນການປິດ ແລະ ບູລະນະຟື້ນຟູສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆຂອງຕົນ ພ້ອມທັງໃຫ້ສິດ ໃນການປະກອບຄຳເຫັນ ກ່ຽວກັບຜົນສຳເລັດ ແລະ ບັນຫາຄົງຄ້າງ ໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໃນໄລຍະສິ້ນສຸດໂຄງການ ຊຶ່ງຖືເປັນເງື່ອນໄຂໜຶ່ງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຢັ້ງຢືນການສິ້ນສຸດໂຄງການ.

## ພາກທີ IV
## ການຢັ້ງຢືນກ່ຽວກັບສິ່ງແວດລ້ອມ

**ມາດຕາ 40 ການຢັ້ງຢືນກ່ຽວກັບສິ່ງແວດລ້ອມ**

ການຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແມ່ນການຮັບຮອງເອົາບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ.

**ມາດຕາ 41 ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ**

ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແມ່ນໜັງສືຢັ້ງຢືນການຮັບຮອງກ່ຽວກັບສິ່ງແວດລ້ອມ ທີ່ອອກໃຫ້ແກ່ໂຄງການລົງທຶນ ແລະ ກິດຈະການຕ່າງໆ.

ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ມີອາຍຸການນຳໃຊ້ໄດ້ຕະຫຼອດໄລຍະເວລາຂອງໂຄງການ ແຕ່ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕ້ອງໄດ້ປັບປຸງທຸກ ສອງ ຫາ ຫ້າ ປີ ຕາມແຕ່ລະປະເພດໂຄງການລົງທຶນ ແລະ ກິດຈະການຕ່າງໆ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຮອງ ແລະ ອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ, ໜັງສືຢັ້ງຢືນ ຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໂດຍປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບກິດຈະການ ການລົງທຶນສຳປະທານ ຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຈະອອກໃຫ້ກ່ອນການເຊັນສັນຍາສຳປະທານ. ສ່ວນກິດຈະການການລົງທຶນ ກ່ຽວກັບທຸລະກິດແຮ່ທາດ ຕາມກົດໝາຍ ວ່າດ້ວຍແຮ່ທາດ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຈະອອກໃຫ້ກ່ອນການຮັບຮອງບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

ສຳລັບໂຄງການ ແລະ ກິດຈະການ ໃນບັນຊີຄວບຄຸມ ຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ລວມທັງໂຄງການ ແລະ ກິດຈະການຕ່າງໆ ທີ່ຢູ່ໃນບັນຊີການຈັດແບ່ງກຸ່ມ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ ໑ ຂອງດຳລັດສະບັບນີ້ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຈະອອກໃຫ້ກ່ອນການອະນຸຍາດລົງທຶນ.

**ມາດຕາ 42 ເງື່ອນໄຂການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕໍ່ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ**

ການອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມຕໍ່ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ມີເງື່ອນໄຂ ດັ່ງນີ້:

1. ຕ້ອງສຳເລັດທຸກຂະບວນການ ຂອງການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ໂດຍການມີສ່ວນຮ່ວມຂອງສັງຄົມ;
2. ມີຂໍ້ມູນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງກັບຄວາມເປັນຈິງ ແລະ ໄດ້ເປີດເຜີຍໃຫ້ຜູ້ທີ່ຖືກຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ;
3. ໄດ້ຮັບການເຫັນດີຈາກພະແນກການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ສຽງສ່ວນຫຼາຍຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
4. ໄດ້ຮັບການຢັ້ງຢືນ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນກະທົບຕໍ່ເນື້ອທີ່ດິນປ່າໄມ້, ຊະນິດພັນໄມ້, ຊີວະນາໆພັນ ແລະ ມາດຕະການແກ້ໄຂ. ໃນກໍລະນີມີການຫັນປ່ຽນເນື້ອທີ່ດິນປ່າໄມ້ ຕ້ອງມີການຕີລາຄາຜົນໄດ້ຜົນເສຍ;
5. ກຳນົດງົບປະມານ ໃຫ້ພຽງພໍໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ.

**ມາດຕາ 43 ເງື່ອນໄຂການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕໍ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ**

ການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕໍ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ມີເງື່ອນໄຂ ດັ່ງນີ້:

1. ຕ້ອງສຳເລັດທຸກຂະບວນການ ຂອງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ໂດຍການມີສ່ວນຮ່ວມຂອງສັງຄົມ;
2. ມີຂໍ້ມູນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງກັບຄວາມເປັນຈິງ ແລະ ໄດ້ເປີດເຜີຍໃຫ້ຜູ້ທີ່ຖືກຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ;
3. ດ້ຮັບການເຫັນດີຈາກກະຊວງ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ສຽງສ່ວນຫຼາຍ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
4. ໄດ້ຮັບການຢັ້ງຢືນຈາກຂະແໜງການກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນກະທົບຕໍ່ເນື້ອທີ່ດິນປ່າໄມ້, ຊະນິດພັນໄມ້, ຊີວະນາໆພັນ ແລະ ມາດຕະການແກ້ໄຂ. ໃນກໍລະນີມີການຫັນປ່ຽນເນື້ອທີ່ດິນປ່າໄມ້ ຕ້ອງມີການຕີລາຄາຜົນໄດ້ຜົນເສຍ;

5. ໄດ້ຮັບການຢັ້ງຢືນ ຈາກຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃນກໍລະນີໂຄງການມີການທົດແທນຄ່າເສຍຫາຍ ແລະ ການຈັດສັນພູມລຳເນົາ ແລະ ອາຊີບ;
6. ໄດ້ຮັບການຢັ້ງຢືນ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ ຈາກຂະແໜງການສາທາລະນະສຸກ ໃນກໍລະນີມີຜົນກະທົບຕໍ່ສຸຂະພາບ;
7. ວາງເງິນຄ້ຳປະກັນດ້ານສິ່ງແວດລ້ອມ ເພື່ອບູລະນະຟື້ນຟູສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ;
8. ກຳນົດງົບປະມານ ໃຫ້ພຽງພໍໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ.

**ມາດຕາ 44 ເງື່ອນໄຂການອອກໜັງສືຢັ້ງຢືນຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ**

ເງື່ອນໄຂການອອກໜັງສືຢັ້ງຢືນຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມມີ ດັ່ງນີ້:

1. ສຳລັບໂຄງການທົ່ວໄປ ໃຫ້ສົ່ງບົດສະຫຼຸບການຈັດຕັ້ງປະຕິບັດ ຕໍ່ແຜນຄຸ້ມຄອງແລະຕິດຕາມກວດກາສິ່ງແວດລ້ອມ ໃນໄລຍະຜ່ານມາ ແລະ ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສຳລັບໄລຍະຕໍ່ໄປ.
2. ສຳລັບໂຄງການສະຫຼັບຊັບຊ້ອນ:

- ໄລຍະກໍ່ສ້າງຕ້ອງມີບົດສະຫຼຸບການຈັດຕັ້ງປະຕິບັດ ຕໍ່ແຜນຄຸ້ມຄອງແລະຕິດຕາມກວດກາສິ່ງແວດລ້ອມ ແລະ ມີແຜນຄຸ້ມຄອງ ແລະ ຕິດຕາມກວດກາໃນໄລຍະກໍ່ສ້າງ;
- ໄລຍະດຳເນີນງານ ຕ້ອງມີບົດສະຫຼຸບການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໃນໄລຍະກໍ່ສ້າງ ແລະ ມີແຜນຄຸ້ມຄອງ ແລະ ຕິດຕາມກວດກາໃນໄລຍະດຳເນີນງານ;

ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໃນໄລຍະກໍ່ສ້າງ ແລະ ດຳເນີນງານໂຄງການ ຕ້ອງສົ່ງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງໜ້ອຍ ເກົ້າສິບ ວັນ ກ່ອນໃບຢັ້ງຢືນໝົດອາຍຸ. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຕໍ່ອາຍຸໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ກ່ອນໃບຢັ້ງຢືນໝົດອາຍຸ.

**ມາດຕາ 45 ການປະຕິເສດການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ**

ອີງຕາມຜົນການທົບທວນກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມຈະບໍ່ອອກໃຫ້ແກ່ໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຫາກເຫັນວ່າມີ ກໍລະນີ ດັ່ງນີ້:

1. ມີຜົນເສຍຫຼາຍກວ່າຜົນໄດ້;
2. ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ສຸຂະພາບ, ການດຳລົງຊີວິດ, ຊັບສິນຂອງປະຊາຊົນ ເຊັ່ນ: ເຮັດໃຫ້ມີການຍົກຍ້າຍປະຊາຊົນຈຳນວນຫຼາຍ ແຕ່ບໍ່ມີເຂດຈັດສັນພູມລຳເນົາ ແລະ ອາຊີບ ທີ່ພຽງພໍ ແລະ ເໝາະສົມ;
3. ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຄວາມອຸດົມສົມບູນຂອງລະບົບນິເວດ ຫຼື ເຮັດໃຫ້ລະບົບນິເວດມີການປ່ຽນແປງ ແລະ ເສື່ອມໂຊມ;
4. ສົ່ງຜົນກະທົບຕໍ່ສັດ ແລະ ພືດ ທີ່ຫາຍາກ ແລະ ໃກ້ຈະສູນພັນ;
5. ສົ່ງຜົນກະທົບຕໍ່ເຂດຍຸດທະສາດແຫ່ງຊາດ, ເຂດມໍລະດົກ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ຮີດຄອງປະເພນີອັນດີງາມ ແລະ ທັດສະນີຍະພາບອັນສວຍງາມ ທີ່ເປັນເອກະລັກຂອງຊາດ;
6. ມີຜົນກະທົບແບບສະສົມ ຊຶ່ງເປັນສາເຫດເຮັດໃຫ້ເກີນຄວາມສາມາດ ໃນການຮອງຮັບຂອງລະບົບນິເວດທຳມະຊາດ ແລະ ຄຸນນະພາບສິ່ງແວດລ້ອມ;
7. ລະເມີດກົດໝາຍ.

**ມາດຕາ 46 ການໂຈະໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ**

ໂຄງການລົງທຶນ ແລະ ກິດຈະການຕ່າງໆ ຈະຖືກໂຈະໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບສິ່ງແວດລ້ອມ ທີ່ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມຮ້າຍແຮງ;
2. ບໍ່ປະຕິບັດຕາມເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
3. ບໍ່ປະຕິບັດພັນທະດ້ານການເງິນ, ພັນທະດ້ານສິ່ງແວດລ້ອມ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
4. ບໍ່ປະຕິບັດຕາມແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
5. ປິດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ;
6. ບໍ່ປະຕິບັດການແກ້ໄຂບັນຫາສິ່ງແວດລ້ອມ ພາຍຫຼັງທີ່ໄດ້ຮັບໜັງສືແຈ້ງເຕືອນ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
7. ມີຜົນກະທົບຫຼາຍ ຕໍ່ສຸຂະພາບ, ການດຳລົງຊີວິດ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ.

ການໂຈະໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕ້ອງມີກຳນົດເວລາອັນແນ່ນອນ ເພື່ອໃຫ້ເຈົ້າຂອງໂຄງການ ປັບປຸງ ແລະ ແກ້ໄຂ.

ພາຍຫຼັງທີ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ໂຈະໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຂະແໜງການທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ເພື່ອໂຈະການດຳເນີນໂຄງການລົງທຶນ ແລະ ກິດຈະການດັ່ງກ່າວ ຕາມກົດໝາຍ ຫຼັງຈາກໄດ້ຮັບແຈ້ງການຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### ມາດຕາ 47 ການຖອນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ

ໂຄງການລົງທຶນ ແລະ ກິດຈະການຕ່າງໆ ຈະຖືກຖອນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕາມແຕ່ລະກໍລະນີ ດັ່ງນີ້:

1. ບໍ່ປັບປຸງ ແລະ ແກ້ໄຂ ຕາມເງື່ອນໄຂການໂຈະ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 46 ຂອງດຳລັດສະບັບນີ້;
2. ບໍ່ດຳເນີນກິດຈະການໃດໆ ພາຍໃນກຳນົດ ສອງ ປີ ນັບແຕ່ວັນໄດ້ຮັບອະນຸຍາດ ເປັນຕົ້ນໄປ ໃບຢັ້ງຢືນດັ່ງກ່າວຈະຕົກໄປ
3. ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບສິ່ງແວດລ້ອມທີ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມຢ່າງຮ້າຍແຮງ.

ພາຍຫຼັງທີ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຖອນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຂະແໜງການທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ເພື່ອຢຸດຕິການດຳເນີນໂຄງການລົງທຶນ ແລະ ກິດຈະການດັ່ງກ່າວ ຕາມກົດໝາຍ ຫຼັງຈາກໄດ້ຮັບແຈ້ງການຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ພາກທີ V
## ການກວດກາວິຊາການດ້ານສິ່ງແວດລ້ອມໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ

### ມາດຕາ 48 ການກວດກາວິຊາການດ້ານສິ່ງແວດລ້ອມໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ

ການກວດກາວິຊາການດ້ານສິ່ງແວດລ້ອມ ແມ່ນການດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນຕົ້ນພັນທະດ້ານສິ່ງແວດລ້ອມ, ເງື່ອນໄຂຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ແຜນການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ແຜນຄຸ້ມຄອງສະເພາະດ້ານ.

### ມາດຕາ 49 ໄລຍະການກວດກາວິຊາການດ້ານສິ່ງແວດລ້ອມ

ການກວດກາວິຊາການດ້ານສິ່ງແວດລ້ອມ ມີ ສາມ ໄລຍະ ດັ່ງນີ້:

1. ການກວດກາໄລຍະກໍ່ສ້າງ ຊຶ່ງແມ່ນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ໃນໄລຍະກໍ່ສ້າງ;

2. ການກວດກາໄລຍະດຳເນີນງານ ຊຶ່ງແມ່ນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ໃນໄລຍະດຳເນີນງານ;
3. ການກວດກາໄລຍະສິ້ນສຸດໂຄງການ ຊຶ່ງແມ່ນການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ໃນໄລຍະສິ້ນສຸດໂຄງການ.

**ມາດຕາ 50 ຄວາມຮັບຜິດຊອບການກວດກາວິຊາການດ້ານສິ່ງແວດລ້ອມ**

ຄວາມຮັບຜິດຊອບການກວດກາວິຊາການດ້ານສິ່ງແວດລ້ອມ ໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ ມີດັ່ງນີ້:

1. ເຈົ້າຂອງໂຄງການ;
2. ຂະແໜງການຮັບຜິດຊອບໂຄງການລົງທຶນ;
3. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 51 ຄວາມຮັບຜິດຊອບການກວດກາວິຊາການດ້ານສິ່ງແວດລ້ອມ ໂດຍເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ແມ່ນພາກສ່ວນທຳອິດທີ່ດຳເນີນການຕິດຕາມກວດກາດ້ວຍຕົນເອງ ຢ່າງເປັນປະຈຳ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ຂອງໂຄງການໃຫ້ມີປະສິດທິຜົນ ດ້ວຍການສ້າງລະບົບການດຳເນີນງານການຕິດຕາມກວດກາ ດັ່ງນີ້:

1. ແຕ່ງຕັ້ງພະນັກງານທີ່ມີຄຸນວຸດທິສະເພາະດ້ານ ແລະ ສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ເພື່ອຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ປະສານງານກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງ;
2. ສ້າງຕັ້ງໜ່ວຍງານຄຸ້ມຄອງສັງຄົມ ໃນກໍລະນີໂຄງການທີ່ມີການທົດແທນຄ່າເສຍຫາຍ ແລະ ການຈັດສັນພູມລຳເນົາ ແລະ ອາຊີບ;
3. ປະກອບອຸປະກອນຮັບໃຊ້ພາກສະໜາມ ໃຫ້ໄດ້ມາດຕະຖານ ແລະ ພຽງພໍ ເປັນຕົ້ນ ອຸປະກອນເກັບຕົວຢ່າງ ແລະ ເຄື່ອງວັດແທກຄຸນນະພາບ ນ້ຳ, ດິນ, ອາກາດ ແລະ ສຽງ. ສຳລັບກໍລະນີໂຄງການສະຫຼັບຊັບຊ້ອນ ຕ້ອງຕິດຕັ້ງລະບົບການວັດແທກນ້ຳ, ອາກາດ ແລະ ສຽງ ແບບອັດຕະໂນມັດ;
4. ລາຍງານຜົນການຕິດຕາມກວດກາ ໃຫ້ແກ່ຂະແໜງການຮັບຜິດຊອບໂຄງການລົງທຶນ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 52 ຄວາມຮັບຜິດຊອບການກວດກາວິຊາການດ້ານສິ່ງແວດລ້ອມ ໂດຍຂະແໜງການຮັບຜິດຊອບໂຄງການລົງທຶນ**

ຂະແໜງການຮັບຜິດຊອບໂຄງການລົງທຶນ ແມ່ນພາກສ່ວນທີສອງ ທີ່ດຳເນີນການຕິດຕາມກວດກາ ວຽກງານສິ່ງແວດລ້ອມ ໂດຍສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມຂອບເຂດຄວາມຮັບ ຜິດຊອບຂອງຕົນ ດັ່ງນີ້:

1. ຂະແໜງການຮັບຜິດຊອບໂຄງການລົງທຶນ ຂັ້ນສູນກາງ ດຳເນີນການຕິດຕາມກວດກາໃນເມື່ອເຫັນວ່າມີຄວາມຈຳເປັນ;
2. ຂະແໜງການຮັບຜິດຊອບໂຄງການລົງທຶນ ຂັ້ນແຂວງ ດຳເນີນການຕິດຕາມກວດກາ ໃນໄລຍະກໍ່ສ້າງ ສາມ ຫາ ສີ່ ຄັ້ງຕໍ່ປີ, ໃນໄລຍະດຳເນີນງານ ສອງ ຫາ ສາມ ຄັ້ງຕໍ່ປີ ແລະ ໄລຍະສິ້ນສຸດໂຄງການ ໜຶ່ງ ຫາ ສອງ ຄັ້ງຕໍ່ປີ;
3. ຂະແໜງການຮັບຜິດຊອບໂຄງການລົງທຶນ ຂັ້ນເມືອງ ດຳເນີນການຕິດຕາມກວດກາ ໃນໄລຍະກໍ່ສ້າງ ສີ່ ຫາ ຫົກ ຄັ້ງຕໍ່ປີ, ໃນໄລຍະດຳເນີນງານ ສາມ ຫາ ສີ່ ຄັ້ງຕໍ່ປີ ແລະ ໄລຍະສິ້ນສຸດໂຄງການ ສອງ ຫາ ສີ່ ຄັ້ງຕໍ່ປີ. ຍົກເວັ້ນການຕິດຕາມກວດກາວິຊາການດ້ານສິ່ງແວດລ້ອມ ສຳລັບໂຄງການທີ່ສະຫຼັບຊັບຊ້ອນ.

ນອກຈາກການກວດກາວິຊາການດ້ານສິ່ງແວດລ້ອມ ທີ່ກ່າວມາຂ້າງເທິງນີ້ແລ້ວ ໂດຍອີງໃສ່ລັກສະນະພິເສດ ແລະ ຂະໜາດຂອງໂຄງການລົງທຶນ ຈະເພີ່ມ ຫຼື ຫຼຸດ ຈຳນວນຄັ້ງ ໃນການຕິດຕາມກວດກາ ກໍໄດ້.

ຂະແໜງການຮັບຜິດຊອບໂຄງການລົງທຶນ ຕ້ອງລາຍງານຜົນຂອງການຕິດຕາມກວດກາໃນແຕ່ລະຄັ້ງ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 53 ຄວາມຮັບຜິດຊອບການກວດກາວິຊາການດ້ານສິ່ງແວດລ້ອມ ໂດຍຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນພາກສ່ວນທີ ສາມ ທີ່ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ໂດຍສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຕົ້ນ ພັນທະດ້ານສິ່ງແວດລ້ອມ, ເງື່ອນໄຂຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານທີ່ກ່ຽວຂ້ອງ ພ້ອມທັງໃຫ້ຄຳແນະນຳ, ແຈ້ງເຕືອນ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ ແລ້ວລາຍງານຜົນການກວດກາ ໃຫ້ລັດຖະບານ ເປັນແຕ່ລະໄລຍະ ດັ່ງນີ້:

1. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບມະຫາພາກ, ເປັນຜູ້ກຳນົດລະບຽບການ, ຄູ່ມືໃນການຕິດຕາມກວດກາ ແລະ ລົງຕິດຕາມ ໃນເມື່ອເຫັນວ່າມີຄວາມຈຳເປັນ;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດຳເນີນການຕິດຕາມກວດກາ ໃນໄລຍະກໍ່ສ້າງ ສາມ ຄັ້ງຕໍ່ປີ, ໃນໄລຍະດຳເນີນງານ ສອງ ຄັ້ງຕໍ່ປີ ແລະ ໄລຍະສິ້ນສຸດໂຄງການ ໜຶ່ງ ຄັ້ງຕໍ່ປີ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ດຳເນີນການຕິດຕາມກວດກາ ໃນໄລຍະກໍ່ສ້າງ ສາມ ຫາ ສີ່ ຄັ້ງຕໍ່ປີ, ໃນໄລຍະດຳເນີນງານ ສອງ ຫາ ສາມ ຄັ້ງຕໍ່ປີ ແລະ ໄລຍະສິ້ນສຸດໂຄງການສອງ ຫາ ສາມ ຄັ້ງຕໍ່ປີ, ຍົກເວັ້ນການຕິດຕາມກວດກາວິຊາການດ້ານສິ່ງແວດລ້ອມ ສຳລັບໂຄງການທີ່ສະຫຼັບຊັບຊ້ອນ.

ນອກຈາກການກວດກາວິຊາການດ້ານສິ່ງແວດລ້ອມ ທີ່ກ່າວມາຂ້າງເທິງນີ້ແລ້ວ ໂດຍອີງໃສ່ລັກສະນະພິເສດ ແລະ ຂະໜາດຂອງໂຄງການລົງທຶນ ຈະເພີ່ມ ຫຼື ຫຼຸດ ຈຳນວນຄັ້ງ ໃນການຕິດຕາມກວດກາກໍໄດ້ ແລະ ຍັງສາມາດສຸ່ມກວດ ຫຼື ໃນກໍລະນີມີເຫດການສຸກເສີນ ຫຼື ມີຄຳສະເໜີຈາກສັງຄົມ ສາມາດຕິດຕາມກວດກາໄດ້ທັນທີໂດຍແຕ່ງຕັ້ງຄະນະສະເພາະກິດ ເພື່ອຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ.

ສຳລັບໂຄງການສະຫຼັບຊັບຊ້ອນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ປະຈຳຢູ່ພາກສະໜາມ ເພື່ອເຮັດໜ້າທີ່ຄຸ້ມຄອງ ແລະ ຕິດຕາມກວດກາປະຈຳວັນ. ໜ່ວຍງານດັ່ງກ່າວ ປະກອບມີຜູ້ຕາງໜ້າ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງຮັບຜິດຊອບໂຄງການລົງທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 54 ການລາຍງານຜົນການກວດກາ ໂດຍເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ລາຍງານຜົນການກວດກາ ການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ໃຫ້ຂະແໜງການຮັບຜິດຊອບໂຄງການລົງທຶນ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນປົກກະຕິໜຶ່ງເດືອນ, ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ ຕາມທີ່ໄດ້ກຳນົດ ໃນເງື່ອນໄຂໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ. ໃນກໍລະນີຫາກເຫັນວ່າຈະມີຄວາມສ່ຽງເກີດມີອຸບປະຕິເຫດ, ເຫດການສຸກເສີນ ຫຼື ການລະເມີດພັນທະໃດໜຶ່ງ ທີ່ສົ່ງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ຕ້ອງລາຍງານເຫດການດັ່ງກ່າວໂດຍທັນທີ ແລະ ລາຍງານເບື້ອງຕົ້ນ ກ່ຽວກັບສະພາບການທີ່ເກີດຂຶ້ນ ເປັນລາຍລັກອັກສອນພາຍໃນ ຊາວສີ່ ຊົ່ວໂມງ.

ການລາຍງານຜົນການກວດກາ ການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມຂອງໂຄງການ ມີເນື້ອໃນ ດັ່ງນີ້:

1. ຄວາມຄືບໜ້າ, ການລະເມີດຫຼືຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດພັນທະດ້ານສິ່ງແວດລ້ອມ, ເງື່ອນໄຂຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ແຜນການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ແຜນຄຸ້ມຄອງສະເພາະດ້ານ;

2. ຄ່າວັດແທກຄຸນນະພາບສິ່ງແວດລ້ອມເປັນຕົ້ນນ້ຳ, ອາກາດ ແລະ ສຽງໃນຮູບແບບເສັ້ນສະແດງ, ແຜນວາດ ແລະ ຕົວແບບຈຳລອງ ໂດຍທຽບໃສ່ຂໍ້ມູນພື້ນຖານກ່ອນມີໂຄງການ ແລະ ຄ່າມາດຕະຖານສິ່ງແວດລ້ອມ ແຫ່ງຊາດ;
3. ຄວາມຫຍຸ້ງຍາກຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ຂອງໂຄງການ.

ໃນກໍລະນີໂຄງການສະຫຼັບຊັບຊ້ອນ, ຕ້ອງລາຍງານສະພາບການວັດແທກອາກາດ, ນ້ຳ ແລະ ສຽງ ທີ່ເຊື່ອມຕໍ່ລະບົບຖານຂໍ້ມູນ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນ.

**ມາດຕາ 55 ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ**

ການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ຕ້ອງດຳເນີນໂດຍຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ທີ່ໄດ້ຮັບອະນຸຍາດ ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ຕ້ອງດຳເນີນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ດ້ວຍຄວາມໂປ່ງໃສ, ຍຸຕິທຳ, ມີຈັນຍາບັນ ແລະ ຈັນຍາທຳ ໂດຍສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ພ້ອມທັງຮັບຜິດຊອບຕໍ່ຂໍ້ມູນທັງໝົດ ແລະ ຜົນການສຶກສາດັ່ງກ່າວ.

ໃນກໍລະນີຜູ້ບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ຫາກຖືກໂຈະໃບອະນຸຍາດດຳເນີນການບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມແລ້ວ ພາຍໃນກຳນົດເວລາ ສອງ ປີ ຈະບໍ່ອະນຸຍາດໃຫ້ດຳເນີນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ.

## ພາກທີ VI
## ສິດ ແລະ ພັນທະຂອງຜູ້ໄດ້ຮັບຜົນກະທົບ ແລະ ເຈົ້າຂອງໂຄງການ

**ມາດຕາ 56 ສິດຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ**

ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ມີສິດ ດັ່ງນີ້:

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນຂ່າວສານ ກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
2. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບຕາມກົດໝາຍ, ລະບຽບການ ແລະ ມີຄວາມຍຸຕິທຳ;
3. ໄດ້ຮັບການປົກປ້ອງດ້ານສຸຂະພາບ, ກວດສຸຂະພາບ ແລະ ໄດ້ຮັບການປິ່ນປົວ ຕາມແຕ່ລະກໍລະນີ;
4. ໄດ້ຮັບການສົ່ງເສີມ ແລະ ປົກປ້ອງທາງດ້ານວັດທະນະທຳ, ສາສະໜາ, ຮີດຄອງປະເພນີ ແລະ ຄວາມເຊື່ອຖືລວມທັງການສົ່ງເສີມທາງດ້ານບົດບາດຍິງ-ຊາຍ;
5. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
6. ສະເໜີ ຕໍ່ເຈົ້າຂອງໂຄງການ ຫຼື ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ເປັນທຳ;
7. ນຳໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 57 ພັນທະຂອງ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ**

ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ມີພັນທະ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບສະພາບສິ່ງແວດລ້ອມໃນຂອບເຂດໂຄງການ ແລະ ເຂດໃກ້ຄຽງ ພ້ອມທັງຂໍ້ມູນກ່ຽວກັບທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ຊັບສິນ ແລະ ລາຍຮັບຂອງຕົນ;
2. ລາຍງານ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນລາຍລັກອັກສອນ, ປາກເປົ່າ ຫຼື ຜ່ານສື່ ໃນຮູບແບບຕ່າງໆ ຕໍ່ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ;
3. ປະຕິບັດພັນທະອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 58 ສິດ ຂອງເຈົ້າຂອງໂຄງການ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ**

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມເຈົ້າຂອງໂຄງການ ມີສິດ ດັ່ງນີ້:

1. ຄັດເລືອກ ເອົາຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ເພື່ອດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
2. ລົງເກັບກຳຂໍ້ມູນກ່ຽວກັບສິ່ງແວດລ້ອມທີ່ຕິດພັນກັບໂຄງການລົງທຶນຂອງຕົນ;
3. ປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
4. ຕິດຕາມ ທວງຖາມເອກະສານຕ່າງໆ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມນຳບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
5. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
6. ຮ້ອງທຸກ ຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂ ບັນຫາທີ່ເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ເປັນທຳຕໍ່ຕົນເອງ;
7. ນຳໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 59 ພັນທະຂອງເຈົ້າຂອງໂຄງການ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ**

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເຈົ້າຂອງໂຄງການ ມີພັນທະ ດັ່ງນີ້:

1. ຮັບຜິດຊອບຕໍ່ຂໍ້ມູນທີ່ກຳນົດໄວ້ ໃນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
2. ຮັບຜິດຊອບຄ່າໃຊ້ຈ່າຍ ກ່ຽວກັບການກວດກາພາກສະໜາມ, ກອງປະຊຸມແຕ່ລະຂັ້ນ,ຄະນະຜູ້ຊ່ຽວຊານສະເພາະດ້ານ, ຈ້າງຜູ້ຊ່ຽວຊານຕ່າງປະເທດສະເພາະດ້ານ ລວມທັງການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
3. ເສຍຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;
4. ຈ່າຍຄ່າຊັບພະຍາກອນທຳມະຊາດ, ຄ່າບໍລິການລະບົບນິເວດ ແລະ ຄ່າປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ວາງເງິນຄ້ຳປະກັນດ້ານສິ່ງແວດລ້ອມ ເພື່ອບູລະນະຟື້ນຟູສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມກົດໝາຍ ຫຼື ສັນຍາ;
6. ປະກອບທຶນເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ;
7. ປັບປຸງບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຕາມຄຳເຫັນ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

8. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ແຜນການທົດແທນຄ່າເສຍຫາຍ, ການຈັດສັນພູມລໍາເນົາ ແລະ ອາຊີບ ແລະ ແຜນຄຸ້ມຄອງສະເພາະດ້ານ;
9. ແກ້ໄຂຄໍາສະເໜີ ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
10. ປັບປຸງ, ແກ້ໄຂ ແລະ ບູລະນະຟື້ນຟູສິ່ງແວດລ້ອມ ທີ່ເກີດຈາກຜົນກະທົບຂອງໂຄງການຕົນ;
11. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີທີ່ເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການຕົນ ທີ່ບໍ່ໄດ້ຄາດຄະເນ ແລະ ກໍານົດໄວ້ໃນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບເພີ່ມເຕີມໃນການສຶກສາ ແລະ ແກ້ໄຂຜົນກະທົບດັ່ງກ່າວ.

## ພາກທີ VII
## ການຈ້າງຜູ້ຮັບເໝົາ, ການໂອນ ແລະ ການປ່ຽນແປງ ໂຄງການລົງທຶນ ແລະ ກິດຈະການຕ່າງໆ

### ມາດຕາ 60 ການຈ້າງຜູ້ຮັບເໝົາ ໂຄງການລົງທຶນ ແລະ ກິດຈະການຕ່າງໆ

ເຈົ້າຂອງໂຄງການ ທີ່ມີຈຸດປະສົງຈ້າງຜູ້ຮັບເໝົາ ເພື່ອມາດໍາເນີນກິດຈະກໍາໃດໜຶ່ງ ຂອງໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕ້ອງກໍານົດເນື້ອໃນ ແລະ ເງື່ອນໄຂລະອຽດ ກ່ຽວກັບພັນທະ ແລະ ມາດຕະການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ເຂົ້າໃນສັນຍາຮັບເໝົາ ເພື່ອຮັບປະກັນໃຫ້ຜູ້ຮັບເໝົາຈັດຕັ້ງປະຕິບັດພັນທະ ແລະ ມາດຕະການດັ່ງກ່າວ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີຜູ້ຮັບເໝົາ ຫາກບໍ່ປະຕິບັດຕາມເນື້ອໃນຂອງສັນຍາ ທີ່ໄດ້ເຊັນກັບເຈົ້າຂອງໂຄງການ ນັ້ນ, ເຈົ້າຂອງໂຄງການ ຕ້ອງມີຄວາມຮັບຜິດຊອບ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມດັ່ງກ່າວ.

### ມາດຕາ 61 ການໂອນໂຄງການລົງທຶນ ແລະ ກິດຈະການຕ່າງໆ

ເຈົ້າຂອງໂຄງການ ທີ່ມີຈຸດປະສົງໂອນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ໃຫ້ເຈົ້າຂອງໂຄງການຜູ້ໃໝ່, ເຈົ້າຂອງໂຄງການຜູ້ໃໝ່ ຕ້ອງສືບຕໍ່ຈັດຕັ້ງປະຕິບັດຕາມສິດ ແລະ ພັນທະ ດ້ານສິ່ງແວດລ້ອມ ຕາມເງື່ອນໄຂຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ລວມທັງແຜນຄຸ້ມຄອງສະເພາະດ້ານຕະຫຼອດໄລຍະເວລາຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ.

ກໍລະນີມີການໂອນ ຫຼື ປ່ຽນຊື່ບໍລິສັດ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເຈົ້າຂອງໂຄງການ ຕ້ອງສະເໜີຕໍ່ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອປ່ຽນຊື່ເຈົ້າຂອງໂຄງການ ຫຼື ປ່ຽນຊື່ບໍລິສັດ ໃນໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ.

### ມາດຕາ 62 ການປ່ຽນແປງໂຄງການລົງທຶນ ຫຼື ກິດຈະການຕ່າງໆ

ເຈົ້າຂອງໂຄງການ ທີ່ມີຈຸດປະສົງປ່ຽນແປງໂຄງການລົງທຶນ ຫຼື ກິດຈະການຕ່າງໆ ເປັນຕົ້ນ ການສ້າງ ໂຄງການລົງທຶນ ແລະ ກິດຈະການອັນໃໝ່ ຢູ່ໃນພື້ນທີ່ເກົ່າ ຫຼື ການຂະຫຍາຍພື້ນທີ່ໃໝ່, ປ່ຽນແປງດ້ານເຕັກນິກ, ເພີ່ມ ຫຼື ຫຼຸດຂະໜາດຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີຢູ່ແລ້ວ, ເຈົ້າຂອງໂຄງການ ຕ້ອງດໍາເນີນການສ້າງບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພ້ອມດ້ວຍແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານຄືນໃໝ່.

## ພາກທີ VIII
## ຂໍ້ມູນຂ່າວສານກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

### ມາດຕາ 63 ການສະໜອງຂໍ້ມູນ ຂ່າວສານດ້ານສິ່ງແວດລ້ອມ

ການສະໜອງຂໍ້ມູນຂ່າວສານ ດ້ານສິ່ງແວດລ້ອມ ແມ່ນການໃຫ້ຂໍ້ມູນທາງດ້ານກາຍະພາບ, ຊີວະພາບ ແລະ ເສດຖະກິດ-ສັງຄົມ ແລະ ຂໍ້ມູນອື່ນ ເພື່ອອໍານວຍຄວາມສະດວກໃນການສ້າງ ແລະ ການທົບທວນບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ການຕິດຕາມກວດກາສິ່ງແວດລ້ອມ ລວມທັງການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ.

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງສະໜອງຂໍ້ມູນຂ່າວສານ ດັ່ງນີ້:

1. ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການທີ່ກ່ຽວຂ້ອງອື່ນໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນຂ່າວສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຕົນ ໃຫ້ເຈົ້າຂອງໂຄງການເພື່ອໃຊ້ເຂົ້າໃນວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
2. ເຈົ້າຂອງໂຄງການສະໜອງຂໍ້ມູນຂ່າວສານ ກ່ຽວກັບໂຄງການລົງທຶນ ແລະ ກິດຈະການຕ່າງໆພ້ອມທັງຂໍ້ມູນຂ່າວສານ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການຢ່າງພຽງພໍ ໃຫ້ແກ່ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອທົບທວນ ແລະ ພິຈາລະນາຮັບຮອງ;
3. ເຈົ້າຂອງໂຄງການຕ້ອງສ້າງລະບົບຖານຂໍ້ມູນ ເພື່ອນໍາໃຊ້ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານເປັນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ ໃຫ້ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນກ່ຽວຂ້ອງ ເປັນແຕ່ລະໄລຍະເພື່ອຕິດຕາມ ແລະ ປະເມີນຜົນ;
4. ຜູ້ໄດ້ຮັບຜົນກະທົບ ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບສະພາບສິ່ງແວດລ້ອມ ໃນຂອບເຂດໂຄງການ ແລະ ເຂດໃກ້ຄຽງ ພ້ອມທັງຂໍ້ມູນກ່ຽວກັບທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ຊັບສິນ ແລະ ລາຍຮັບຂອງຕົນ.

### ມາດຕາ 64 ການເປີດເຜີຍຂໍ້ມູນຂ່າວສານດ້ານສິ່ງແວດລ້ອມ

ການເປີດເຜີຍຂໍ້ມູນຂ່າວສານດ້ານສິ່ງແວດລ້ອມ ແມ່ນການນໍາສະເໜີຂໍ້ມູນຂ່າວສານ ກ່ຽວກັບບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ລວມທັງຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນຮັບຊາບ ເຖິງຜົນກະທົບທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ ຕໍ່ສິ່ງແວດລ້ອມທາງກົງ ຫຼື ທາງອ້ອມຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ.

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງເປີດເຜີຍຂໍ້ມູນຂ່າວສານ ດັ່ງນີ້:

1. ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ເຈົ້າຂອງໂຄງການ ຕ້ອງເປີດເຜີຍ ແລະ ອໍານວຍຄວາມສະດວກ ໃນການເຂົ້າເຖິງຂໍ້ມູນຂ່າວສານ ທີ່ຕິດພັນກັບເຈົ້າຂອງໂຄງການ, ຜົນກະທົບຕໍ່ສິ່ງແວດລ້ອມ, ພັນທະ ແລະ ມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ລວມທັງຜົນການຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການຕ່າງໆ ແລະ ຂໍ້ມູນອື່ນ;
2. ການເປີດເຜີຍຂໍ້ມູນ ຂ່າວສານ ຂອງໂຄງການແຕ່ລະໄລຍະຕ້ອງເຮັດເປັນພາສາລາວ ແລະ ພາສາອັງກິດ ສູ່ສາທາລະນະຮັບຊາບ ໂດຍຜ່ານໜັງສືພິມ, ໂທລະພາບ, ໂທລະໂຄ່ງ, ວິທະຍຸ, ເວັບໄຊ, ສື່ອອນລາຍ ແລະ ສື່ສິ່ງພິມອື່ນ;

3. ໃນກໍລະນີທີ່ເຈົ້າຂອງໂຄງການ ບໍ່ຕ້ອງການເປີດເຜີຍຂໍ້ມູນຂ່າວສານໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຂ້າງເທິງນີ້, ເຈົ້າຂອງໂຄງການ ຕ້ອງເຮັດຄຳຮ້ອງພ້ອມທັງຄັດຕິດຂໍ້ມູນຂ່າວສານດັ່ງກ່າວ ສະເໜີເຖິງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ພາຍໃນກຳນົດເວລາ ຊາວຫ້າ ວັນລັດຖະການ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະພິຈາລະນາຂໍ້ມູນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ສະເໜີມານັ້ນ ຖືເປັນຂໍ້ມູນຂ່າວສານທີ່ບໍ່ເປີດເຜີຍ ຫຼື ບໍ່. ຖ້າຫາກຕົກໃນກໍລະນີຂໍ້ມູນຂ່າວສານທີ່ບໍ່ເປີດເຜີຍ ຕ້ອງໄດ້ເກັບຮັກສາໄວ້ເປັນຄວາມລັບ ຕາມກຳນົດເວລາ ທີ່ໄດ້ຕົກລົງເຫັນດີນຳກັນລະຫວ່າງ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກັບເຈົ້າຂອງໂຄງການ;
4. ໂຄງການສະຫຼັບຊັບຊ້ອນເຈົ້າຂອງໂຄງການ ຕ້ອງສ້າງສູນຂໍ້ມູນຂ່າວສານ ຢູ່ໃນຂອບເຂດໂຄງການ ແລະ ບັນດາເມືອງທີ່ກ່ຽວຂ້ອງ.

## ພາກທີ IX
## ຂໍ້ຫ້າມ

### ມາດຕາ 65 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ປອມແປງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ຕາປະທັບ, ລາຍເຊັນ ແລະ ເອກະສານຕ່າງໆ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ນຳໃຊ້ ສິດ, ໜ້າທີ່ ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ພະນັກງານຂອງລັດ;
4. ປົດບັງ, ຊຸກເຊື່ອງ, ໃຫ້ ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ໃຫ້ ຫຼື ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;
6. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
7. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານຂອງລັດ ໂດຍບໍ່ມີມູນຄວາມຈິງ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 66 ຂໍ້ຫ້າມ ສຳລັບເຈົ້າຂອງໂຄງການ ແລະ ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ

ຫ້າມເຈົ້າຂອງໂຄງການ ແລະ ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ມີພຶດຕິກຳ ດັ່ງນີ້:

1. ເຈົ້າຂອງໂຄງການ ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ດ້ວຍຕົນເອງ;
2. ໃຫ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ໂດຍບໍ່ສອດຄ່ອງກັບການອະນຸຍາດ ແລະ ການຢັ້ງຢືນ;
3. ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ນຳໃຊ້ຕາປະທັບຂອງບໍລິສັດຕົນ ປະທັບໃສ່ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ທີ່ບໍ່ໄດ້ດຳເນີນດ້ວຍຕົນເອງ;
4. ຊື້ຈ້າງ, ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ;
5. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່ ແລະ ພະນັກງານ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ;
6. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ເຈົ້າໜ້າທີ່ ແລະ ພະນັກງານ;
7. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ ໂດຍບໍ່ມີມູນຄວາມຈິງ;
8. ປອມແປງເອກະສານ, ລາຍເຊັນ, ຕາປະທັບ ແລະ ໃຫ້ຂໍ້ມູນຂ່າວສານບໍ່ຖືກກັບຄວາມເປັນຈິງ;
9. ລະເມີດພັນທະ ແລະ ເງື່ອນໄຂ ຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ຫຼີກລ້ຽງການເສຍພັນທະດ້ານສິ່ງແວດລ້ອມ, ຄ່າຊັບພະຍາກອນທຳມະຊາດ, ຄ່າທຳນຽມ, ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

10. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
11. ເຈົ້າຂອງໂຄງການ ກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ນອນໃນບັນຊີການຈັດແບ່ງກຸ່ມ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍບໍ່ໄດ້ຮັບໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 67 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການຮັບຜິດຊອບໂຄງການລົງທຶນ ມີພຶດຕິກຳ ດັ່ງນີ້:

1. ສຶກສາ ແລະ ສ້າງບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
2. ເມີນເສີຍ, ເລີນເລີ້ຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງ ການພິຈາລະນາເອກະສານ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ລວມໝູ່;
4. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກ່ຽວກັບ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
5. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່, ຂໍເອົາ, ທວງເອົາ, ຮັບສິນບົນ ຈາກເຈົ້າຂອງໂຄງການ ເພື່ອຫາຜົນປະໂຫຍດສ່ວນຕົວ, ຈຸ້ມເຈື້ອ, ເຊື້ອສາຍ ແລະ ພັກພວກ;
6. ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ປອມແປງເອກະສານ, ລາຍເຊັນ ແລະ ຕາປະທັບ;
8. ປົດບັງ, ຊຸກເຊື່ອງ, ໃຫ້ ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
9. ຊ່ຽວຊານຕ່າງປະເທດສະເພາະດ້ານ, ຄະນະຜູ້ຊ່ຽວຊານສະເພາະດ້ານ ທົບທວນບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ທີ່ຕົນມີສ່ວນກ່ຽວຂ້ອງກັບໂຄງການລົງທຶນ ແລະ ກິດຈະການນັ້ນ;
10. ເປີດເຜີຍຂໍ້ມູນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;
11. ທຳລາຍຫຼັກຖານ, ເອກະສານກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ X
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 68 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການປະເມີນຜົນກະທົບສິ່ງແວດລ້ອມ ສາມາດດຳເນີນຕາມຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂດ້ວຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

ມາດຕາ 69 ການໄກ່ເກ່ຍ ຫຼື ການປະນີປະນອມ

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າເສຍຫາຍບໍ່ຫຼວງຫຼາຍເກີດຂຶ້ນ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດ້ວຍການປຶກສາຫາລື, ເຈລະຈາ ແລະ ປະນີປະນອມ ໂດຍສັນຕິວິທີ ຫຼື ສະເໜີໃຫ້ທໍາການໄກ່ເກ່ຍ.

ມາດຕາ 70 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບ ແລະ ສ້າງຄວາມເສຍຫາຍ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າຄວາມເສຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີມີສິດສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂ.

ມາດຕາ 71 ການແກ້ໄຂຂໍ້ຂັດແຍ່ງດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີມີຂໍ້ຂັດແຍ້ງທີ່ກໍ່ໃຫ້ເກີດຜົນກະທົບ ແລະ ສ້າງຄວາມເສຍຫາຍ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເກີດຂຶ້ນ ຄູ່ກໍລະນີສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

ມາດຕາ 72 ການຮ້ອງຟ້ອງຕໍ່ສານປະຊາຊົນ

ໃນກໍລະນີທີ່ເກີດຂໍ້ຂັດແຍ້ງ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສີນຕາມກົດໝາຍ.

ມາດຕາ 73 ການແກ້ໄຂທີ່ມີລັກສະນະສາກົນ

ໃນກໍລະນີທີ່ມີຂໍ້ຂັດແຍ້ງ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ມີລັກສະນະສາກົນ ຄູ່ກໍລະນີສາມາດສະເໜີ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ XI
## ການຄຸ້ມຄອງ ແລະ ການກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ມາດຕາ 74 ອົງການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການປະສານສົມທົບກັບບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມປະກອບດ້ວຍ:

1. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
2. ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ;
3. ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ.

ມາດຕາ 75 ສິດ ແລະ ໜ້າທີ່ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ໃນການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເພື່ອນຳສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ມາເປັນລະບຽບການ, ແຜນການ, ແຜນງານ ແລະ ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
5. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
6. ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ວຽກງານຕິດຕາມກວດກາສິ່ງແວດລ້ອມ;
7. ໃຫ້ຄຳແນະນຳທາງດ້ານວິຊາການ ແກ່ເຈົ້າຂອງໂຄງການ ແລະ ຜູ້ດຳເນີນການບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການຕິດຕາມກວດກາສິ່ງແວດລ້ອມ;
8. ສ້າງ ແລະ ປັບປຸງບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ແທດເໝາະກັບສະພາບຕົວຈິງ ໃນຂອບເຂດທົ່ວປະເທດ;
9. ທົບທວນ ແລະ ພິຈາລະນາຮັບຮອງເອົາ ບົດສຶກສາການກຳນົດຂອບເຂດການສຶກສາ ແລະ ໜ້າວຽກສຳລັບການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
10. ລົງກວດກາພາກສະໜາມ ແລະ ຈັດກອງປະຊຸມປຶກສາຫາລືຂັ້ນຕ່າງໆ ໃນໄລຍະທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
11. ແຕ່ງຕັ້ງຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນສູນກາງ ທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
12. ຈ້າງຜູ້ຊ່ຽວຊານຕ່າງປະເທດສະເພາະດ້ານ ເພື່ອຊ່ວຍທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານ ໃນກໍລະນີຈຳເປັນ;
13. ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕໍ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;
14. ອອກໜັງສືຢັ້ງຢືນຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ນອນໃນກຸ່ມທີສອງ;
15. ຮັບຮອງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສຳລັບໄລຍະສຳຫຼວດແຮ່ທາດ ແລະ ແຜນບູລະນະຟື້ນຟູສິ່ງແວດລ້ອມ;
16. ແນະນຳໃຫ້ເຈົ້າຂອງໂຄງການ ຍົກລະດັບການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ມາເປັນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ໃນກໍລະນີເຫັນວ່າມີຜົນກະທົບຫຼາຍ;
17. ແນະນຳໃຫ້ເຈົ້າຂອງໂຄງການ ສຶກສາເພີ່ມເຕີມ ຫຼື ປັບປຸງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານທີ່ໄດ້ຮັບຮອງແລ້ວໃນກໍລະນີເຫັນວ່າມີຜົນກະທົບເກີດຂຶ້ນນອກຈາກທີ່ໄດ້ສຶກສາໄວ້;

18. ສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ປະຈຳພາກສະໜາມ ເພື່ອຄຸ້ມຄອງ ແລະ ຕິດຕາມກວດກາປະຈຳວັນ ວຽກງານສິ່ງແວດລ້ອມ ສຳລັບໂຄງການສະຫຼັບຊັບຊ້ອນ;
19. ກວດກາວິຊາການດ້ານສິ່ງແວດລ້ອມ ໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
20. ແຕ່ງຕັ້ງຄະນະສະເພາະກິດ ຂັ້ນສູນກາງ ເພື່ອຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນກໍລະນີມີເຫດການສຸກເສີນ ແລະ ອີງຕາມຄວາມຈຳເປັນ;
21. ຮັບຄຳສະເໜີ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ແລະ ຜູ້ມີສ່ວນຮ່ວມ ທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
22. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ເຈົ້າຂອງໂຄງການ ໃນວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
23. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
24. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
25. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 76 ສິດ ແລະ ໜ້າ ທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການລະອຽດ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ສະເໜີອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
4. ສະເໜີ ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
5. ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ກ່ຽວກັບວຽກງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ວຽກງານຕິດຕາມກວດກາສິ່ງແວດລ້ອມ;
6. ໃຫ້ຄຳແນະນຳທາງດ້ານວິຊາການ ແກ່ເຈົ້າຂອງໂຄງການ ແລະ ຜູ້ດຳເນີນການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ໃນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການຕິດຕາມກວດກາສິ່ງແວດລ້ອມ;
7. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ ເຈົ້າຂອງໂຄງການ ໃນການດຳເນີນຂະບວນການມີສ່ວນຮ່ວມຂອງສັງຄົມ ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນ;
8. ລົງກວດກາພາກສະໜາມ ແລະ ຈັດກອງປະຊຸມປຶກສາຫາລືຂັ້ນຕ່າງໆ ໃນໄລຍະທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
9. ແຕ່ງຕັ້ງຄະນະຜູ້ຊ່ຽວຊານສະເພາະດ້ານ ຂັ້ນແຂວງ ທົບທວນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
10. ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕໍ່ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
11. ສະເໜີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂຈະ ຫຼື ຖອນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕໍ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ;

12. ອອກໜັງສືຢັ້ງຢືນຕໍ່ອາຍຸ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສໍາລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ນອນໃນກຸ່ມທີໜຶ່ງ;
13. ກວດກາວິຊາການດ້ານສິ່ງແວດລ້ອມ ໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ;
14. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແຕ່ງຕັ້ງຄະນະສະເພາະກິດ ເພື່ອຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນກໍລະນີເກີດເຫດການສຸກເສີນ ແລະ ອີງຕາມຄວາມຈໍາເປັນ;
15. ຮັບຄໍາສະເໜີ ຂອງຜູ້ໄດ້ຮັບຜົນກະທົບ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງ;
16. ປະສານສົມທົບກັບພະແນກການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ເຈົ້າຂອງໂຄງການໃນວຽກງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
17. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
18. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 77 ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ໃນວຽກງານຄຸ້ມຄອງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການລະອຽດ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
2. ເຜີຍແຜ່ ແລະ ສຶກສາອົບຮົມນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກແກ່ເຈົ້າຂອງໂຄງການ ໃນການລົງສໍາຫຼວດ, ເກັບກໍາຂໍ້ມູນ ແລະ ການດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
4. ກວດກາວິຊາການດ້ານສິ່ງແວດລ້ອມ ໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ;
5. ສະເໜີ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ໂຈະ ຫຼື ຖອນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
6. ເຂົ້າຮ່ວມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ;
7. ຮັບຄໍາສະເໜີ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງ;
8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກັບວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
9. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕໍ່ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ຂັ້ນເມືອງ ຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງຂະແໜງການຮັບຜິດຊອບໂຄງການລົງທຶນ**

ໃນການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂະແໜງການຮັບຜິດຊອບໂຄງການລົງທຶນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ສ້າງແຜນ, ຈັດສັນງົບປະມານ, ປົກປັກຮັກສາສິ່ງແວດລ້ອມ, ຊຸກຍູ້ເຈົ້າຂອງໂຄງການດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ

ແລະ ເປັນມິດກັບສິ່ງແວດລ້ອມ ເຂົ້າໃນການກໍ່ສ້າງ ແລະ ດຳເນີນໂຄງການ ພ້ອມທັງກວດກາວິຊາການດ້ານສິ່ງແວດລ້ອມ ເປັນພາກສ່ວນທີ່ສອງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 52 ຂອງດຳລັດສະບັບນີ້.

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການປົກປັກຮັກສາສິ່ງແວດລ້ອມ, ການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມເຂົ້າໃນການກໍ່ສ້າງ ແລະ ດຳເນີນໂຄງການ.

## ໝວດທີ 2

## ການກວດກາ

**ມາດຕາ 80 ອົງການກວດກາວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ**

ອົງການກວດກາວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນ ກັບອົງການຄຸ້ມຄອງວຽກງານປະເມີນຜົນສິ່ງແວດລ້ອມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງດຳລັດສະບັບນີ້.
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 81 ເນື້ອໃນການກວດກາ**

ການກວດກາວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຄຸ້ມຄອງວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ການໃຊ້ສິດ, ການປະຕິບັດໜ້າທີ່ ແລະ ການນຳໃຊ້ມາດຕະການທາງດ້ານກົດໝາຍ ຕໍ່ຜູ້ລະເມີດ.

**ມາດຕາ 82 ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ.

ການກວດກາໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XII
### ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 83 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດ ດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 84 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນຂໍ້ຫ້າມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາຫຼືໜັກ.

## ພາກທີ XIII
### ບົດບັນຍັດສຸດທ້າຍ

**ມາດຕາ 85 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ເຈົ້າຂອງໂຄງການ ແລະ ຜູ້ໄດ້ຮັບຜົນກະທົບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 86 ກຳນົດເວລາໃນການແກ້ໄຂໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ບໍ່ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການຮັບຜິດຊອບໂຄງການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ບໍ່ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແລະ ແຈ້ງໃຫ້ເຈົ້າຂອງໂຄງການດັ່ງກ່າວ ໃຫ້ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໃຫ້ສຳເລັດພາຍໃນກຳນົດເວລາ ຫົກ ເດືອນ ຫາ ໜຶ່ງ ປີ ຕາມແຕ່ລະກໍລະນີ ນັບແຕ່ວັນໄດ້ຮັບແຈ້ງເປັນຕົ້ນໄປ.

**ມາດຕາ 87 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ